ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ ເລກທີ 112 /ນຍ.

ນະຄອນຫລວງວຽງຈັນ, ວັນທີ 16.02.2010

# ດຳລັດ
# ວ່າດ້ວຍ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

- ອີງຕາມກົດໝາຍວ່າດ້ວຍ ລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ສະບັບເລກທີ 02/99/ສພຊ, ລົງວັນທີ 03/04/1999;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ສະບັບເລກທີ 2843/ສນຍ-ອຊນສ, ລົງວັນທີ 21 ທັນວາ 2009.

## ນາຍົກລັດຖະມົນຕີ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດ ສະບັບນີ້ ມີຈຸດປະສົງ ດັ່ງນີ້:

– ຜັນຂະຫຍາຍກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມໃນມາດຕາ 8 ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

– ກຳນົດຫລັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຕັ້ງ, ເຄື່ອນໄຫວ, ຄຸ້ມຄອງ ແລະ ຕິດຕາມກວດກາ ວຽກງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

– ຮັບປະກັນໃຫ້ທຸກໂຄງການລົງທຶນຂອງລັດ ແລະ ເອກະຊົນທັງພາຍໃນ ແລະ ຕ່າງປະເທດທີ່ດຳເນີນການຢູ່ໃນ ສປປ ລາວ (ຕໍ່ໄປນີ້ເອີ້ນວ່າ ໂຄງການລົງທຶນ) ທີ່ກໍ່ໃຫ້ເກີດ ຫລືຈະກໍ່ໃຫ້ເກີດຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຕ້ອງມີການອອກແບບ, ສ້າງມາດຕະການ

ປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫລື ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ) ແລະ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ) ທີ່ຖືກຕ້ອງ ແລະ ເຫມາະສົມ;

– ປ້ອງກັນ, ຫລຸດຜ່ອນ ແລະ ແກ້ໄຂຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ທີ່ເກີດຈາກໂຄງການລົງທຶນ ຢ່າງມີປະສິດທິຜົນ;

– ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃຫ້ມີຄວາມຍືນຍົງ.

## ມາດຕາ 2. ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ຕໍ່ທຸກໂຄງການລົງທຶນ ຊຶ່ງແບ່ງອອກເປັນ 2 ກຸ່ມໂດຍ ອີງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເປັນຜູ້ປະສານສົມທົບກັບຂະແຫນງການທີ່ກ່ຽວຂ້ອງ ເພື່ອກຳນົດບັນຊີລະອຽດໃນແຕ່ລະໄລຍະ:

– ກຸ່ມທີ່ 1: ແມ່ນໂຄງການລົງທຶນຂະຫນາດນ້ອຍ ຫລື ມີຜົນກະທົບຫນ້ອຍຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຊຶ່ງຕ້ອງດຳເນີນການສຶກສາສິ່ງແວດລ້ອມເບື້ອງຕົ້ນ;

– ກຸ່ມທີ່ 2: ແມ່ນໂຄງການລົງທຶນຂະຫນາດໃຫຍ່ ທີ່ມີຄວາມສະຫລັບສັບຊ້ອນ ຫລື ມີຜົນກະທົບຫລາຍຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຊຶ່ງຕ້ອງດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.

## ມາດຕາ 3. ຄວາມຫມາຍຂອງຄຳສັບ

ຄຳສັບຕ່າງໆ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມຫມາຍ ດັ່ງນີ້:

1) ການສຶກສາສິ່ງແວດລ້ອມເບື້ອງຕົ້ນ(ສສຕ) (Initial Environmental Examination) ຫມາຍເຖິງການສຶກສາ, ການສຳຫລວດ ແລະ ການຄົ້ນຄວ້າວິໄຈຂໍ້ມູນ ເພື່ອຄາດຄະເນຜົນກະທົບເບື້ອງຕົ້ນຕໍ່ສິ່ງແວດລ້ອມ ແລະ ສັງຄົມ ລວມທັງຜົນກະທົບຕໍ່ສຸຂະພາບທີ່ອາດຈະເກີດຂຶ້ນຈາກໂຄງການລົງທຶນໃນກຸ່ມທີ່ 1 ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງດຳລັດສະບັບນີ້ ພ້ອມທັງກຳນົດມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບທີ່ອາດຈະເກີດຂຶ້ນຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

2) ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ(ປຜສ) (Environmental Impact Assessment) ຫມາຍເຖິງ ການສຶກສາ, ການສຳຫຼວດ, ການຄົ້ນຄວ້າ ວິໄຈຂໍ້ມູນ ແລະ ຄາດຄະເນຜົນກະທົບດ້ານບວກ ແລະ ດ້ານລົບທີ່ອາດຈະເກີດຂຶ້ນຕໍ່ສິ່ງແວດລ້ອມ ແລະ ສັງຄົມ ລວມທັງຜົນກະທົບຕໍ່ສຸຂະພາບ ໃນໄລຍະສັ້ນ ແລະ ໄລຍະຍາວ ຈາກໂຄງການລົງທຶນ ໃນກຸ່ມທີ່ 2 ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງດຳລັດສະບັບນີ້ ພ້ອມທັງການສະເຫນີທາງເລືອກທີ່ເຫມາະສົມແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ) ແລະ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ເພື່ອປ້ອງກັນ ແລະ ຫລຸດຜ່ອນຜົນກະທົບທີ່ອາດຈະເກີດຂຶ້ນໃນເວລາກໍ່ສ້າງ ແລະ ດຳເນີນໂຄງການລົງທຶນ;

3) ການກັ່ນຕອງໂຄງການ (Project Screening) ຫມາຍເຖິງການຄົ້ນຄວ້າ ແລະ ໄຈ້ແຍກຂໍ້ມູນຕ່າງໆ ທີ່ເປັນສ່ວນປະກອບຂອງໂຄງການລົງທຶນ ເພື່ອໃຫ້ຮູ້ວ່າໂຄງການທີ່ສະເຫນີມາ

ນັ້ນຕ້ອງໃຫ້ດຳເນີນ ຫລື ບໍ່ດຳເນີນການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

4) ການວາງຂອບເຂດການສຶກສາ ເພື່ອປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (Scoping) ຫມາຍເຖິງ ຂະບວນການກຳນົດຂອບເຂດການສຶກສາຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຂໍ້ມູນທີ່ຈຳເປັນຕ້ອງເກັບກຳ ແລະ ວິໄຈເພື່ອການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຈາກໂຄງການລົງທຶນ ຊຶ່ງການສຶກສາດັ່ງກ່າວຮຽກຮ້ອງ ໃຫ້ມີການກຳນົດຂອບເຂດຫນ້າວຽກ ເພື່ອສ້າງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

5) ຂອບເຂດຫນ້າວຽກ (Terms of Reference) ຫມາຍເຖິງ ຫນ້າວຽກທັງຫມົດທີ່ຕ້ອງຈັດຕັ້ງປະຕິບັດໃນເວລາດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ໂດຍອີງຕາມຂອບເຂດການສຶກສາເພື່ອປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.

6) ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ) (Environmental Management and Monitoring Plan) ຫມາຍເຖິງ ແຜນການທີ່ໄດ້ສັງລວມເອົາຫນ້າວຽກຕົ້ນຕໍດ້ານສິ່ງແວດລ້ອມ, ມາດຕະການປ້ອງກັນ, ຫລຸດຜ່ອນ ແລະ ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ ທີ່ໄດ້ສຶກສາໄວ້ໃນບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ພ້ອມທັງກຳນົດໂຄງຮ່າງການຈັດຕັ້ງ ແລະ ຫນ້າທີ່ຮັບຜິດຊອບ, ຕາຕະລາງເວລາ, ງົບປະມານໃຫ້ພຽງພໍ ເພື່ອຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ຕິດຕາມກວດກາດ້ານສິ່ງແວດລ້ອມ ໃນໄລຍະກໍ່ສ້າງ, ດຳເນີນ ແລະ ສິ້ນສຸດໂຄງການລົງທຶນ.

7) ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ) (Social Management and Monitoring Plan) ຫມາຍເຖິງ ແຜນການ ທີ່ໄດ້ສັງລວມເອົາຫນ້າວຽກຕົ້ນຕໍ ດ້ານສັງຄົມ ແລະ ບັນດາມາດຕະການປ້ອງກັນ, ຫລຸດຜ່ອນ ແລະ ແກ້ໄຂຜົນກະທົບດ້ານສັງຄົມ ທີ່ໄດ້ສຶກສາໄວ້ໃນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ພ້ອມທັງມາດຕະການທົດແທນຄ່າເສຍຫາຍ, ຍົກຍ້າຍຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່ ຂອງປະຊາຊົນຜູ້ໄດ້ຮັບຜົນກະທົບ; ການກຳນົດໂຄງຮ່າງການຈັດຕັ້ງ ແລະ ຫນ້າທີ່ຮັບຜິດຊອບ, ຕາຕະລາງເວລາ ແລະ ງົບປະມານໃຫ້ພຽງພໍສຳລັບການຈັດຕັ້ງປະຕິບັດວຽກງານ ຕິດຕາມກວດກາດ້ານສັງຄົມ ໃນໄລຍະກໍ່ສ້າງ, ດຳເນີນ ແລະ ສິ້ນສຸດໂຄງການລົງທຶນ;

8) ຜູ້ພັດທະນາໂຄງການ ຫມາຍເຖິງ ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງໃດໜຶ່ງ ຈາກພາກສ່ວນຂອງລັດ ຫລື ເອກະຊົນທີ່ໄດ້ຮັບການອະນຸຍາດໃຫ້ສຶກສາ, ສຳຫລວດ, ອອກແບບ, ກໍ່ສ້າງ ແລະ ດຳເນີນໂຄງການ;

9) ຜູ້ມີສ່ວນຮ່ວມ ຫມາຍເຖິງ ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ມີຄວາມສົນໃຈ, ມີສ່ວນພົວພັນ ຫລື ມີຜົນປະໂຫຍດໃນໂຄງການລົງທຶນ, ກິດຈະກຳ ຫລື ບັນຫາໃດຫນຶ່ງ ຍ້ອນວ່າເຂົາເຈົ້າມີສ່ວນກ່ຽວຂ້ອງ ຫລື ໄດ້ຮັບຜົນກະທົບຈາກໂຄງການລົງທຶນ;

10) ການມີສ່ວນຮ່ວມ ຫມາຍເຖິງ ຂະບວນການປຶກສາຫາລື, ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບໂຄງການລົງທຶນ ເພື່ອນຳເອົາຄວາມຄິດຄວາມເຫັນຈາກພາກສ່ວນທີ່ຄາດວ່າຈະໄດ້ຮັບຜົນກະທົບ ຫລື ໄດ້ຮັບຜົນປະໂຫຍດຈາກໂຄງການລົງທຶນ ກໍຄືຈາກຜູ້ທີ່ມີຄວາມສົນໃຈຕໍ່

ໂຄງການລົງທຶນ, ມາເປັນບ່ອນອີງໃນການສ້າງ ແລະ ພິຈາລະນາບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ). ການມີສ່ວນຮ່ວມ ຍັງສະແດງອອກໃນການເຂົ້າຮ່ວມກອງປະຊຸມໃນລະດັບຕ່າງໆ ຂອງຜູ້ມີສ່ວນຮ່ວມລວມທັງຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ໃນໄລຍະການກໍ່ສ້າງ ແລະ ໄລຍະດໍາເນີນໂຄງການ;

11) ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ຫມາຍເຖິງ ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງທີ່ໄດ້ຮັບຜົນກະທົບໂດຍກົງ ຫລື ທາງອ້ອມ ຈາກໂຄງການລົງທຶນ ຍ້ອນການເວນຄືນທີ່ດິນ ຫລື ອະສັງຫາລິມະຊັບຕາມກົດຫມາຍ, ການປ່ຽນແປງການນໍາໃຊ້ທີ່ດິນ, ຜົນກະທົບຕໍ່ລະບົບນິເວດວິທະຍາ ແລະ ສິ່ງແວດລ້ອມໃນພື້ນທີ່ບ່ອນເຂົາເຈົ້າຕັ້ງຖິ່ນຖານ ແລະ ທໍາມາຫາກິນ;

12) ບ້ານເຈົ້າພາບ ຫມາຍເຖິງ ບ້ານທີ່ຢູ່ໃນເຂດພື້ນທີ່ບ່ອນຈະຮອງຮັບການຍົກຍ້າຍປະຊາຊົນຜູ້ໄດ້ຮັບຜົນກະທົບ ຈາກໂຄງການລົງທຶນ;

13) ການຍົກຍ້າຍຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່ ຫມາຍເຖິງ:

– ມາດຕະການຫລຸດຜ່ອນຜົນກະທົບດ້ານລົບຕໍ່ສັງຄົມ ກໍຄືປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ສ່ວນໃດສ່ວນຫນຶ່ງ ຫລື ທັງຫມົດຂອງໂຄງການລົງທຶນ ລວມທັງການທົດແທນຄ່າເສຍຫາຍຈາກການສູນເສຍຊັບສິນ ແລະ ລາຍຮັບ ດ້ວຍການຟື້ນຟູສິດທິ, ການຊ່ວຍເຫລືອໂດຍກົງໃນການຟື້ນຟູ ພື້ນຖານການຜະລິດໃຫມ່ ໃນເຂດພື້ນທີ່ ທີ່ມີການຍົກຍ້າຍຈັດສັນໃຫມ່;

– ການຊ່ວຍເຫລືອ ຜູ້ທີ່ໄດ້ຮັບຜົນກະທົບຢ່າງຫນັກຫນ່ວງ ຍ້ອນການສູນເສຍຊັບສິນ, ທີ່ຢູ່ອາໄສ, ເນື້ອທີ່ທໍາການຜະລິດ, ລາຍຮັບ ແລະ ວຽກເຮັດງານທໍາ ຊຶ່ງຕ້ອງມີການທົດແທນຄ່າເສຍຫາຍດັ່ງກ່າວ ຕາມຄວາມເຫມາະສົມ ລວມທັງການຈັດສັນສິ່ງອໍານວຍຄວາມສະດວກ ແນໃສ່ປັບປຸງມາດຕະຖານຊີວິດການເປັນຢູ່ໃຫ້ດີຂຶ້ນກວ່າເກົ່າ ຫລື ຢ່າງໜ້ອຍ ບໍ່ໃຫ້ຫລຸດກັບລະດັບກ່ອນມີໂຄງການລົງທຶນ;

14) ໃບຢັ້ງຢືນດ້ານສິ່ງແວດລ້ອມ ຫມາຍເຖິງ ເອກະສານທາງດ້ານນິຕິກໍາ ທີ່ຮັບຮອງເອົາບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ);

15) ໂຄງການທີ່ກໍາລັງເຄື່ອນໄຫວໃນປັດຈຸບັນ ຫມາຍເຖິງ ໂຄງການທີ່ກໍາລັງຈັດຕັ້ງປະຕິບັດການກໍ່ສ້າງ ຫລື ການຂຸດຄົ້ນ ແລະ ດໍາເນີນການຜະລິດ;

16) ໂຄງການລົງທຶນທີ່ມີຄວາມສະຫລັບສັບຊ້ອນ ຫມາຍເຖິງ ໂຄງການລົງທຶນທີ່ມີຜົນກະທົບຢ່າງຫລວງຫລາຍຕໍ່ສິ່ງແວດລ້ອມ ແລະ ສັງຄົມ ລວມທັງຜົນກະທົບຂ້າມຊາຍແດນ ຫລື ຜົນກະທົບແບບສະສົມຕໍ່ໂຄງການລົງທຶນອື່ນໆ ແລະ ມີການນໍາໃຊ້ເຕັກໂນໂລຊີທີ່ສະຫລັບສັບຊ້ອນ.

### ມາດຕາ 4. ຫລັກການທົ່ວໄປ

ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຕ້ອງປະຕິບັດຕາມຫລັກການທົ່ວໄປ ດັ່ງນີ້:

1) ບັນດາໂຄງການລົງທຶນທີ່ຈັດຢູ່ໃນກຸ່ມທີ່ 1 ແລະ ກຸ່ມທີ່ 2 ລວມທັງ ໂຄງການທີ່ໄດ້ກຳນົດໄວ້ຕາມມາດຕາ 6 ຂໍ້ 2 ຂອງດຳລັດສະບັບນີ້ ກ່ອນເຊັນສັນຍາສຳປະທານ ຫລື ສັນຍາຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ຫລື ດຳເນີນການກໍ່ສ້າງ ຫລື ກ່ອນການອອກໃບອະນຸຍາດດຳເນີນກິດຈະການ ຕ້ອງໄດ້ຮັບໃບ ຢັ້ງຢືນດ້ານສິ່ງແວດລ້ອມເສຍກ່ອນ;

2) ການດຳເນີນຂະບວນການ ການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຕ້ອງດຳເນີນໂດຍບໍລິສັດທີ່ປຶກສາ ຫລື ທີ່ປຶກສາທີ່ໄດ້ຮັບການຂຶ້ນທະບຽນຈາກອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມເທົ່ານັ້ນ. ການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຕ້ອງປະກອບມີການສຶກສາຫລາຍທາງເລືອກເພື່ອຄັດເລືອກເອົາທາງເລືອກທີ່ດີທີ່ສຸດ; ການສຶກສາຜົນກະທົບຕໍ່ວັດຖຸບູຮານ, ວັດທະນະທຳ ແລະ ຮີດຄອງປະເພນີ; ການວາງແຜນແກ້ໄຂຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ; ການມີສ່ວນຮ່ວມ ຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆໃນຂະບວນການປຶກສາຫາລືໃນຂັ້ນຕ່າງໆ ແລະ ການກຳນົດງົບປະມານໃຫ້ພຽງພໍ;

3) ຕ້ອງຮັບປະກັນການມີສ່ວນຮ່ວມຂອງມວນຊົນ ແລະ ການປຶກສາຫາລືກັບອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ, ກັບຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆໃນຂະບວນການສ້າງ ແລະ ທົບທວນບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

4) ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງ ທີ່ມີຈຸດປະສົງ ໃຫ້ການບໍລິການ ດ້ານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຢູ່ ສປປ ລາວ ຕ້ອງດຳເນີນການ ດັ່ງນີ້:

– ບໍລິສັດທີ່ປຶກສາພາຍໃນຕ້ອງໄດ້ຮັບອະນຸຍາດ ແລະ ຂຶ້ນທະບຽນດຳເນີນການບໍລິການດ້ານສິ່ງແວດລ້ອມ ຈາກອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ;

– ທີ່ປຶກສາພາຍໃນຕ້ອງລົງທະບຽນເປັນທີ່ປຶກສາດ້ານສິ່ງແວດລ້ອມ ນຳອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ;

– ບໍລິສັດທີ່ປຶກສາ ຫລື ທີ່ປຶກສາຕ່າງປະເທດ ທີ່ມີໃບອະນຸຍາດດຳເນີນການບໍລິການ ດ້ານສິ່ງແວດລ້ອມ ຢູ່ປະເທດໃດໜຶ່ງມາແລ້ວ ຕ້ອງລົງທະບຽນດຳເນີນການບໍລິການດ້ານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ນຳອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ.

5) ຜູ້ພັດທະນາໂຄງການ ຕ້ອງຮັບຜິດຊອບ ດັ່ງນີ້:

– ຄວາມຖືກຕ້ອງຊັດເຈນທາງດ້ານຂໍ້ມູນຂອງບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຂອງຕົນ;

– ທຸກການໃຊ້ຈ່າຍໃນຂະບວນການສ້າງ ແລະ ທົບທວນບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ລວມທັງ ມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ

ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ) ລວມທັງການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາ ການຈັດຕັ້ງປະຕິບັດມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫລື ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ);

– ໃນກໍລະນີໂຄງການລົງທຶນໃຫມ່ທີ່ອາດມີຜົນກະທົບຕໍ່ໂຄງການລົງທຶນອື່ນ, ຕ້ອງປະເມີນຜົນກະທົບແບບສະສົມ(Cumulative Impact Assessment) ໂດຍປະສານສົມທົບກັບໂຄງການລົງທຶນທີ່ມີຢູ່ແລ້ວ;

– ໂຄງການລົງທຶນ ທີ່ມີທ່າອ່ຽງກໍ່ໃຫ້ເກີດຜົນກະທົບຂ້າມຊາຍແດນ ຕ້ອງດໍາເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມຂ້າມຊາຍແດນ(Transboundary Environmental Impact Assessment).

6) ອົງການຈັດຕັ້ງ ທີ່ທົບທວນບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ມີຫນ້າທີ່ຕິດຕາມກວດກາ ຜົນການຈັດຕັ້ງປະຕິບັດມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫລື ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ) ຂອງໂຄງການລົງທຶນ ໂດຍອົງການປົກຄອງທ້ອງຖິ່ນມີຫນ້າທີ່ ຕິດຕາມກວດກາການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ).

# ພາກທີ II
# ຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ
## ຫມວດທີ 1
## ຂັ້ນຕອນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການກັ່ນຕອງໂຄງການລົງທຶນ

### ມາດຕາ 5. ຂັ້ນຕອນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

ຂັ້ນຕອນການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງການພິຈາລະນາຮັບຮອງບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຕ້ອງປະຕິບັດຕາມວົງຈອນໂຄງການລົງທຶນ ໂດຍສອດຄ່ອງກັບບັນດາກົດຫມາຍ ຂອງຂະແຫນງການທີ່ກ່ຽວຂ້ອງ.

### ມາດຕາ 6. ການກັ່ນຕອງໂຄງການລົງທຶນ

ການກັ່ນຕອງໂຄງການລົງທຶນ ຕ້ອງປະຕິບັດ ດັ່ງນີ້:

1) ຜູ້ພັດທະນາໂຄງການລົງທຶນ ຕ້ອງນໍາໃຊ້ບັນຊີໂຄງການລົງທຶນ ຊຶ່ງໄດ້ແບ່ງເປັນກຸ່ມທີ່ 1 ແລະ ກຸ່ມທີ່ 2 ເພື່ອເປັນບ່ອນອີງໃນການກໍານົດວ່າ ໂຄງການທີ່ສະເຫນີມານັ້ນນອນໃນຢູ່ໃນກຸ່ມໃດ, ແລ້ວ ດໍາເນີນການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ການປະເມີນຜົນກະທົບຕໍ່ສິ່ງແວດ

ລ້ອມ ອີງຕາມປະເພດ ແລະ ຂະໜາດຂອງໂຄງການລົງທຶນ ໃນກຸ່ມທີ່ 1 ຫລື ກຸ່ມທີ່ 2 ໂດຍສອດຄ່ອງກັບຂັ້ນຕອນການອະນຸມັດໂຄງການລົງທຶນ ຂອງຂະແໜງການ ກ່ຽວຂ້ອງ.

2) ສໍາລັບໂຄງການລົງທຶນທີ່ບໍ່ຢູ່ໃນກຸ່ມທີ່ 1 ຫລື ກຸ່ມທີ່ 2 ຕາມຂໍ້ 1 ເທິງນີ້ ແຕ່ມີທ່າອ່ຽງສ້າງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຜູ້ພັດທະນາໂຄງການ ຕ້ອງສະເໜີເອກະສານໂຄງການລົງທຶນ ມາຍັງອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ (ຕໍ່ໄປນີ້ເອີ້ນວ່າ ອຊນສ) ເພື່ອພິຈາລະນາກັ່ນຕອງ ເຊັ່ນກໍລະນີດັ່ງນີ້:

– ໂຄງການລົງທຶນທີ່ສ້າງຂຶ້ນໃໝ່ ຊຶ່ງບໍ່ໄດ້ນອນໃນກຸ່ມທີ່ 1 ຫລື ກຸ່ມທີ່ 2 ແຕ່ຄາດຄະເນວ່າຈະກໍ່ໃຫ້ເກີດຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫລື ມີຜົນກະທົບແບບສະສົມ ຫລື ຜົນກະທົບຂ້າມຊາຍແດນ;

– ໂຄງການລົງທຶນທີ່ໄດ້ຮັບອະນຸຍາດໃຫ້ດໍາເນີນກິດຈະການແລ້ວ ແຕ່ມີການຂະຫຍາຍ, ເພີ່ມກໍາລັງການຜະລິດ ຫລື ມີການປ່ຽນແປງຂະບວນການຜະລິດ;

– ໂຄງການລົງທຶນທີ່ຄາດຄະເນວ່າ ຈະກໍ່ໃຫ້ເກີດຜົນກະທົບຕໍ່ເຂດປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ, ເຂດອະນຸລັກຊີວະນາໆພັນ ຫລື ເຂດມໍລະດົກທາງວັດທະນະທໍາ ແລະ ປະຫວັດສາດ ແລະ ເຂດຫວງຫ້າມອື່ນໆ.

3) ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ດໍາເນີນການກັ່ນຕອງໂຄງການລົງທຶນ ຕາມຂໍ້ 2 ເທິງນີ້ ແລະ ແຈ້ງຜົນການພິຈາລະນາ ເປັນລາຍລັກອັກສອນໃຫ້ຜູ້ພັດທະນາໂຄງການ ພາຍໃນ 15 ວັນລັດຖະການ ຕາມກໍລະນີໃດໜຶ່ງ ດັ່ງນີ້:

– ໂຄງການລົງທຶນ ຕ້ອງດໍາເນີນການສຶກສາສິ່ງແວດລ້ອມເບື້ອງຕົ້ນ;

– ໂຄງການລົງທຶນ ຕ້ອງດໍາເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

– ໂຄງການລົງທຶນ ບໍ່ຕ້ອງດໍາເນີນການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.

## ໝວດທີ 2
## ການມີສ່ວນຮ່ວມ

### ມາດຕາ 7. ສິດ ແລະ ໜ້າທີ່ ຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ

ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ ມີສິດ ແລະ ໜ້າທີ່ ດັ່ງນີ້:

1) ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບແຜນການພັດທະນາໂຄງການລົງທຶນ, ຜົນປະໂຫຍດທີ່ຈະໄດ້ຮັບ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ທີ່ຈະເກີດຈາກໂຄງການລົງທຶນ;

2) ສະໜອງຂໍ້ມູນຂ່າວສານ ກ່ຽວກັບ ສະພາບສິ່ງແວດລ້ອມ ແລະ ສັງຄົມ ຂອງທ້ອງຖິ່ນໃນບໍລິເວນໂຄງການ ແລະ ເຂດໃກ້ຄຽງ ເພື່ອປະກອບເປັນຂໍ້ມູນສ້າງບົດລາຍງານການສຶກສາສິ່ງ

ແວດລ້ອມເບື້ອງຕົ້ນ ທີ່ປະກອບດ້ວຍມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ);

3) ໄດ້ຮັບຂໍ້ມູນ ກ່ຽວກັບບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ລວມທັງມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດ ລ້ອມ (ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ) ລວມທັງບົດລາຍງານຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດ ມາດຕະການຫລຸດຜ່ອນຜົນກະທົບຂອງໂຄງການລົງທຶນ ດັ່ງກ່າວ;

4) ເຂົ້າຮ່ວມກອງປະຊຸມປຶກສາຫາລືແຕ່ລະຂັ້ນ ກ່ຽວກັບ ບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ);

5) ເຂົ້າຮ່ວມຂະບວນການປຶກສາຫາລື ກ່ຽວກັບ ການທົດແທນຄ່າເສຍຫາຍ, ການຍົກຍ້າຍຈັດສັນ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ;

6) ເຂົ້າຮ່ວມຂະບວນການປຶກສາຫາລື ກ່ຽວກັບການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ແລະ ສັງຄົມ ກໍຄືແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ຂອງໂຄງການລົງທຶນ;

7) ສະເຫນີແກ້ໄຂບັນຫາສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການລົງທຶນເປັນລາຍລັກອັກສອນ ຕໍ່ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ເພື່ອດຳເນີນການແກ້ໄຂບັນຫາສິ່ງແວດລ້ອມ ແລະ ສັງຄົມ ຫລື ສະເຫນີຕໍ່ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມໂດຍກົງ ໃນກໍລະນີບັນຫາສິ່ງແວດລ້ອມ ບໍ່ໄດ້ຮັບການແກ້ໄຂ.

## ມາດຕາ 8. ຂັ້ນຕອນການມີສ່ວນຮ່ວມ

ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ອົງການປົກຄອງທ້ອງຖິ່ນ, ຂະແຫນງການຮັບຜິດຊອບໂຄງການລົງທຶນ ແລະ ຜູ້ພັດທະນາໂຄງການ ມີໜ້າທີ່ຮັບຜິດຊອບ ຮ່ວມກັນໃນການດຳເນີນຂະບວນການມີສ່ວນຮ່ວມ ຂອງປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ ໂດຍສອດຄ່ອງກັບຂັ້ນຕອນຂອງຂະບວນການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ດັ່ງນີ້:

1) ໃນໄລຍະເກັບກຳຂໍ້ມູນ ເພື່ອສ້າງບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ອົງການປົກຄອງທ້ອງຖິ່ນ ແລະ ຜູ້ພັດທະນາໂຄງການ ຕ້ອງຈັດກອງປະຊຸມເຜີຍແຜ່ໃຫ້ບ້ານ ໂດຍການໂຄສະນາເຜີຍແຜ່ດ້ວຍຫລາຍຮູບການເພື່ອອະທິບາຍກ່ຽວກັບແຜນພັດທະນາໂຄງການ ແລະ ຜົນກະທົບທາງດ້ານສິ່ງແວດ

ລ້ອມ ແລະ ສັງຄົມ ພ້ອມທັງຮັບຟັງຄໍາເຫັນ ຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ;

2) ໃນໄລຍະການສ້າງ ແລະ ທົບທວນບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ລວມທັງມາດຕະ ການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ), ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ອົງການປົກຄອງທ້ອງຖິ່ນ, ບັນດາຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ ແລະ ຜູ້ພັດທະນາໂຄງການ ຕ້ອງຈັດກອງປະຊຸມປຶກສາຫາລື ຂັ້ນບ້ານ, ຂັ້ນເມືອງ, ຂັ້ນແຂວງ ຕາມຂະບວນການທົບທວນບົດລາຍງານດັ່ງກ່າວ ເພື່ອເປີດໂອກາດໃຫ້ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ ໄດ້ປະກອບຄໍາຄິດເຫັນໃສ່ຮ່າງ ສະບັບທໍາອິດຈົນເຖິງສະບັບສຸດທ້າຍ ຂອງບົດລາຍງານ ແລະ ແຜນການດັ່ງກ່າວ;

3) ໃນໄລຍະສໍາຫລວດ-ຂຸດຄົ້ນ, ກໍ່ສ້າງ ແລະ ດໍາເນີນໂຄງການລົງທຶນ, ຜູ້ພັດທະນາໂຄງການ ຕ້ອງແຈ້ງໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ ຮັບຊາບ ກ່ຽວກັບການດໍາເນີນກິດຈະການຂອງໂຄງການ ຊຶ່ງອາດຈະມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ເປັນຕົ້ນ: ການເປີດໜ້າດິນ, ລະເບີດຫີນ, ການຂົນສົ່ງ, ການນໍາໃຊ້ ແລະ ເກັບຮັກສາວັດຖຸ ແລະ ສານເຄມີທີ່ເປັນອັນຕະລາຍ, ການປ່ອຍນ້ຳອອກຈາກອ່າງເກັບນ້ຳ ແລະ ອື່ນໆ; ພ້ອມນີ້ ຜູ້ພັດທະນາໂຄງການ ຕ້ອງສ້າງເງື່ອນໄຂເພື່ອອໍານວຍຄວາມສະດວກໃຫ້ແກ່ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ ສາມາດເຂົ້າເຖິງຂໍ້ມູນທົ່ວໄປ ກ່ຽວກັບໂຄງການລົງທຶນ.

## ໝວດທີ 3
## ການສຶກສາສິ່ງແວດລ້ອມເບື້ອງຕົ້ນ(ສສຕ)

### ມາດຕາ 9. ໜ້າທີ່ ຂອງອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ອົງການປົກຄອງທ້ອງຖິ່ນ, ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ, ຂະແໜງການທີ່ກ່ຽວຂ້ອງ ແລະ ຜູ້ພັດທະນາໂຄງການ ໃນການສຶກສາສິ່ງແວດລ້ອມເບື້ອງຕົ້ນ

1) ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ມີໜ້າທີ່ ດັ່ງນີ້:

ກ) ອອກໃບຢັ້ງຢືນດ້ານສິ່ງແວດລ້ອມ ເພື່ອຮັບຮອງບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ອີງຕາມການສະເໜີຈາກຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ;

ຂ) ເຂົ້າຮ່ວມລົງກວດກາພາກສະໜາມ ແລະ ເຂົ້າຮ່ວມກອງປະຊຸມປຶກສາຫາລື ຂັ້ນເມືອງ ໂດຍອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ສາມາດມອບໝາຍໜ້າທີ່ໃຫ້ຂະແໜງຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ແຂວງ ຫລື ນະຄອນເຂົ້າຮ່ວມແທນໄດ້;

ຄ) ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ອອກບົດແນະນໍາເພື່ອຈັດຕັ້ງປະຕິບັດຕົວຈິງ.

2) ອົງການປົກຄອງທ້ອງຖິ່ນມີໜ້າທີ່ ດັ່ງນີ້:

ກ) ອອກໃບຢັ້ງຢືນດ້ານສິ່ງແວດລ້ອມ ເພື່ອຮັບຮອງບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນບົນພື້ນຖານການຢັ້ງຢືນຈາກອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ;

ຂ) ໃຫ້ຄວາມຮ່ວມມື ແລະ ອໍານວຍຄວາມສະດວກໃຫ້ແກ່ຜູ້ພັດທະນາໂຄງການ ໃນການລົງສໍາຫຼວດ, ການເກັບກໍາຂໍ້ມູນສ້າງບົດລາຍງານ ແລະ ດໍາເນີນຂະບວນການປຶກສາຫາລື ກັບປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ;

ຄ) ໃຫ້ຄວາມຮ່ວມມືໃນການຈັດຕັ້ງໂຄສະນາເຜີຍແຜ່ຂໍ້ມູນ, ປຸກລະດົມປະຊາຊົນຜູ້ໄດ້ຮັບຜົນກະທົບໃຫ້ເຂົ້າໃຈເຖິງຈຸດປະສົງຂອງໂຄງການລົງທຶນ, ຜົນປະໂຫຍດທີ່ຈະໄດ້ຮັບ ແລະ ຜົນກະທົບ ດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ອາດຈະເກີດຂຶ້ນ ຈາກໂຄງການລົງທຶນ;

3) ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນມີໜ້າທີ່ ດັ່ງນີ້:

ກ) ນໍາພາການລົງກວດກາພາກສະໜາມ(ຖ້າຈໍາເປັນ) ພ້ອມທັງເຂົ້າຮ່ວມກອງປະຊຸມປຶກສາຫາລື ຂັ້ນບ້ານ, ຂັ້ນເມືອງ ກັບປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ ຊຶ່ງຜູ້ພັດທະນາໂຄງການເປັນຜູ້ຈັດຂຶ້ນໂດຍຮ່ວມມືກັບອົງການປົກຄອງທ້ອງຖິ່ນ;

ຂ) ທົບທວນບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ແລ້ວສັງລວມຄໍາເຫັນສະເໜີໃຫ້ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາອອກໃບຢັ້ງຢືນດ້ານສິ່ງແວດລ້ອມ.

4) ຂະແໜງການທີ່ກ່ຽວຂ້ອງ ມີໜ້າທີ່ປະກອບຄໍາເຫັນດ້ານວິຊາການ ຕໍ່ບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ແລະ ສາມາດມອບໜ້າທີ່ດັ່ງກ່າວໃຫ້ສາຍຕັ້ງຂອງຕົນທີ່ຢູ່ແຂວງ ຫລື ນະຄອນດໍາເນີນການແທນ.

5) ຜູ້ພັດທະນາໂຄງການ ມີໜ້າທີ່ ດັ່ງນີ້:

ກ) ສຶກສາສະພາບລວມດ້ານກາຍະພາບ, ຊີວະພາບ ແລະ ເສດຖະກິດ-ສັງຄົມ ພ້ອມທັງຄາດຄະເນຜົນກະທົບທີ່ອາດຈະເກີດຂຶ້ນ ຈາກການພັດທະນາໂຄງການລົງທຶນ ໂດຍນໍາໃຊ້ຂໍ້ມູນທີ່ໄດ້ຈາກຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ແຫລ່ງອື່ນໆ ລວມທັງຂໍ້ມູນຈາກການເກັບກໍາຢູ່ພາກສະໜາມຕົວຈິງ ແລະ ຈາກການປຶກສາຫາລືກັບປະຊາຊົນ ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆຂັ້ນບ້ານ ແລະ ຂັ້ນເມືອງ;

ຂ) ປະຕິບັດຕາມບົດແນະນໍາ ກ່ຽວກັບ ການມີສ່ວນຮ່ວມ ໂດຍປັດສະຈາກການຂົ່ມຂູ່, ການບີບບັງຄັບ, ໃຊ້ກໍາລັງ, ໃຫ້ສິນບົນ ແລະ ຕົວະຍົວະຫລອກລວງ;

ຄ) ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ ຈັດກອງປະຊຸມເຜີຍແຜ່ຂັ້ນບ້ານ ເພື່ອອະທິບາຍກ່ຽວກັບແຜນພັດທະນາໂຄງການລົງທຶນ, ຜົນປະໂຫຍດທີ່ຈະໄດ້ຈາກໂຄງການລົງທຶນ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ທີ່ອາດຈະເກີດຈາກໂຄງການລົງທຶນ ພ້ອມທັງສັງລວມ ແລະ ບັນທຶກຄໍາເຫັນຈາກປະຊາຊົນໃນກອງປະຊຸມເພື່ອປະກອບເຂົ້າໃນບົດລາຍງານການສຶກສາ ສິ່ງແວດລ້ອມເບື້ອງຕົ້ນ;

ງ) ສ້າງບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນທີ່ປະກອບດ້ວຍມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

ຈ) ຈັດກອງປະຊຸມປຶກສາຫາລືຂັ້ນບ້ານ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນ, ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ ແລະ ມີການເຂົ້າຮ່ວມຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ ເພື່ອຜ່ານຮ່າງບົດລາຍງານ ກ່ຽວກັບການສຶກສາສິ່ງແວດລ້ອມເບື້ອງຕົ້ນ ສະບັບທຳອິດ ແລ້ວປັບປຸງບົດລາຍງານດັ່ງກ່າວ ຕາມຄຳເຫັນຂອງກອງປະຊຸມ; ຫລັງຈາກນັ້ນກໍນຳໄປເຜີຍແຜ່ ຄືນໃນຂັ້ນບ້ານໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມ ເພື່ອມີຄຳເຫັນ ແລະ ປັບປຸງຄືນກ່ອນການຈັດກອງປະຊຸມຂັ້ນເມືອງ;

ສ) ຈັດກອງປະຊຸມປຶກສາຫາລືຂັ້ນເມືອງ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ ເພື່ອຜ່ານຮ່າງບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນສະບັບປັບປຸງ ຕາມຄຳເຫັນຂອງກອງປະຊຸມຂັ້ນບ້ານ ໂດຍການເຂົ້າຮ່ວມຂອງຜູ້ຕາງໜ້າປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນແຕ່ລະບ້ານ ເພື່ອປັບປຸງບົດລາຍງານດັ່ງກ່າວຕາມຄຳເຫັນຂອງກອງປະຊຸມ. ບົດລາຍງານສະບັບປັບປຸງ ຕ້ອງເຮັດເປັນພາສາລາວ ຖ້າແມ່ນໂຄງການລົງທຶນພາຍໃນ, ຫລື ເປັນພາສາລາວ ແລະ ພາສາອັງກິດ ຖ້າແມ່ນໂຄງການລົງທຶນຂອງຕ່າງປະເທດ, ແລ້ວນຳສະເໜີ ຕໍ່ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ ເພື່ອດຳເນີນຂະບວນການທົບທວນ;

ຊ) ບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ທີ່ຈະສະເໜີເພື່ອທົບທວນ ຕ້ອງຄັດຕິດບົດບັນທຶກກອງປະຊຸມປຶກສາຫາລືໃນແຕ່ລະຄັ້ງ ແລະ ຕ້ອງມີລາຍເຊັນຢັ້ງຢືນຂອງບໍລິສັດທີ່ປຶກສາທີ່ໄດ້ສ້າງບົດລາຍງານ ແລະ ຜູ້ພັດທະນາໂຄງການດັ່ງກ່າວ.

**ມາດຕາ 10. ການທົບທວນບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ**

ຂັ້ນຕອນການທົບທວນບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ມີດັ່ງນີ້:

1) ຜູ້ພັດທະນາໂຄງການ ຕ້ອງເຮັດຄຳຮ້ອງ ພ້ອມທັງສົ່ງບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ສະບັບປັບປຸງຫລັງຈາກກອງປະຊຸມຂັ້ນເມືອງ ຈຳນວນ 1 ຊຸດ ໃຫ້ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ;

2) ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ ດຳເນີນການກວດກາຄວາມຖືກຕ້ອງຄົບຖ້ວນຂອງບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ພາຍໃນ 10 ວັນລັດຖະການ ແລະ ແຈ້ງໃຫ້ຜູ້ພັດທະນາໂຄງການ ເປັນລາຍລັກອັກສອນ ດັ່ງນີ້:

ກ) ໃຫ້ຜູ້ພັດທະນາໂຄງການ ສົ່ງບົດລາຍງານດັ່ງກ່າວ ຈຳນວນ 15 ຊຸດ ພ້ອມດ້ວຍບົດລາຍງານໃນຮູບແບບເອເລັກໂຕຣນິກ ໃຫ້ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ ໃນກໍລະນີທີ່ເຫັນວ່າ ບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ມີຄວາມຖືກຕ້ອງຄົບຖ້ວນ;

ຂ) ໃຫ້ຜູ້ພັດທະນາໂຄງການ ປັບປຸງ ຫລື ສ້າງບົດລາຍງານຄືນໃໝ່ ໃນກໍລະນີ ທີ່ເຫັນວ່າ ບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຍັງບໍ່ຖືກຕ້ອງຄົບຖ້ວນ.

3) ການທົບທວນບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຕ້ອງດຳເນີນພາຍໃນ 50 ວັນລັດຖະການ ນັບແຕ່ວັນທີ່ຜູ້ພັດທະນາໂຄງການສົ່ງເອກະສານຄົບຖ້ວນຕາມຂໍ້ 2 (ກ) ໂດຍບໍ່ນັບໄລຍະເວລາທີ່ຜູ້ພັດທະນາໂຄງການ ຮັບເອກະສານກັບໄປປັບປຸງຄືນໃຫມ່ ຊຶ່ງມີຂັ້ນຕອນລະອຽດ ດັ່ງນີ້:

ກ) ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ ຈະສົ່ງບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ໃຫ້ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ພາຍໃນ 5 ວັນລັດຖະການ ເພື່ອປະກອບຄຳເຫັນ;

ຂ) ຂະແໜງການທີ່ກ່ຽວຂ້ອງ ຕ້ອງສົ່ງບົດປະກອບຄຳເຫັນໃຫ້ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ ພາຍໃນ 20 ວັນລັດຖະການ; ຖ້າບໍ່ສົ່ງບົດປະກອບຄຳເຫັນຕາມກຳນົດເວລາດັ່ງກ່າວ ຈະຖືວ່າເຫັນດີ ຫລື ສະລະສິດໃນການມີຄຳເຫັນຕໍ່ບົດລາຍງານດັ່ງກ່າວ;

ຄ) ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນຈັດກອງປະຊຸມວິຊາການ ເພື່ອໃຫ້ຜູ້ພັດທະນາໂຄງການຊີ້ແຈງກ່ຽວກັບບົດລາຍງານດັ່ງກ່າວ ແລະ ລົງກວດກາພາກສະໜາມ ເມື່ອເຫັນວ່າມີຄວາມຈຳເປັນ ພ້ອມທັງສັງລວມຄຳເຫັນສຸດທ້າຍ ແລ້ວນຳສົ່ງໃຫ້ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາອອກໃບຢັ້ງຢືນດ້ານສິ່ງແວດລ້ອມ;

ງ) ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຈະພິຈາລະນາຕາມກໍລະນີໃດໜຶ່ງດັ່ງນີ້:

1. ອອກໃບຢັ້ງຢືນດ້ານສິ່ງແວດລ້ອມ ເພື່ອຮັບຮອງບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ;

2. ປະກອບຄຳເຫັນໃຫ້ຜູ້ພັດທະນາໂຄງການ ດັ່ງນີ້:

– ໃຫ້ປັບປຸງບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຄືນ;

– ໂຄງການລົງທຶນມີຄວາມສະຫລັບຊັບຊ້ອນ ຫລື ມີຜົນກະທົບຢ່າງຮ້າຍແຮງຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໃຫ້ສືບຕໍ່ເຮັດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

3. ປະຕິເສດບົດລາຍງານ ໃນກໍລະນີ ດັ່ງນີ້:

– ຂໍ້ມູນໃນບົດລາຍງານບໍ່ຖືກຕ້ອງຕາມຄວາມເປັນຈິງ, ປິດບັງ ຫລື ເຊື່ອງຊ້ອນຄວາມສ່ຽງ ແລະ ບັນດາຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ຮ້າຍແຮງ ຊຶ່ງອາດຈະເກີດຂຶ້ນ;

– ມີຫລັກຖານຊີ້ໃຫ້ເຫັນວ່າ ຂໍ້ມູນການສຶກສາສິ່ງແວດລ້ອມເບື້ອງຕົ້ນ ບໍ່ໄດ້ມາຈາກການສຶກສາຕົວຈິງ ໂດຍໂຄງການລົງທຶນເອງ ແຕ່ເປັນການສຳເນົາຈາກໂຄງການລົງທຶນອື່ນ;

– ບໍ່ມີຫລັກຖານທາງດ້ານວິທະຍາສາດ ເພື່ອພິສູດໃຫ້ເຫັນເຖິງຄວາມຊັດເຈນ ຂອງຜົນກະທົບທີ່ກຳນົດໄວ້;

– ບົດລາຍງານບໍ່ໄດ້ກຳນົດຄົບຖ້ວນ ມາດຕະການປ້ອງກັນ, ຫລຸດຜ່ອນ ແລະ ແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

– ໂຄງການຈະສ້າງຜົນກະທົບດ້ານລົບຫລາຍກວ່າດ້ານບວກ;

– ຜູ້ພັດທະນາໂຄງການບໍ່ປະຕິບັດຕາມລະບຽບກົດໝາຍ, ບົດແນະນຳຕ່າງໆ ແລະ ບໍ່ໄດ້ດຳເນີນຂະບວນການມີສ່ວນຮ່ວມ ຢ່າງຖືກຕ້ອງ.

## ໝວດທີ 4
## ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ(ປຜສ)

ມາດຕາ 11. ການກຳນົດຂອບເຂດການສຶກສາ (Scoping) ແລະ ຂອບເຂດໜ້າວຽກ (TOR)

ຜູ້ພັດທະນາໂຄງການຕ້ອງກຳນົດຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກຂອງຕົນ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລ້ວນຳສະເໜີໃຫ້ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ພິຈາລະນາຮັບຮອງກ່ອນດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.

ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຕ້ອງທົບທວນ ແລະ ກວດກາຮ່າງຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກດັ່ງກ່າວໃຫ້ສຳເລັດພາຍໃນ 15 ວັນລັດຖະການ ແລ້ວແຈ້ງຄຳເຫັນເປັນລາຍລັກອັກສອນໃຫ້ຜູ້ພັດທະນາໂຄງການ.

**ມາດຕາ 12. ໜ້າທີ່ ຂອງອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ບັນດາຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ຜູ້ພັດທະນາໂຄງການໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ**

1) ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ມີໜ້າທີ່ ດັ່ງນີ້:

ກ). ໃຫ້ຄຳແນະນຳດ້ານວິຊາການ ກ່ຽວກັບການສ້າງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ);

ຂ). ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ, ຂະແໜງການທີ່ກ່ຽວຂ້ອງລົງກວດກາພາກສະໜາມ ແລະ ເຂົ້າຮ່ວມປຶກສາຫາລືຂັ້ນບ້ານ, ຂັ້ນເມືອງ ກັບຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ;

ຄ). ເປັນເຈົ້າການປະສານງານໃນການຈັດກອງປະຊຸມຂັ້ນແຂວງ ຫລື ນະຄອນ ພ້ອມທັງທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ), ພິຈາລະນາອອກໃບຢັ້ງຢືນດ້ານສິ່ງແວດລ້ອມເພື່ອຮັບຮອງບົດລາຍງານ ແລະ ແຜນການດັ່ງກ່າວ;

2) ບັນດາຂະແໜງການທີ່ກ່ຽວຂ້ອງມີໜ້າທີ່ ດັ່ງນີ້:

ກ). ປະກອບຄຳເຫັນທາງດ້ານວິຊາການ ຕໍ່ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ);

ຂ). ເຂົ້າຮ່ວມກອງປະຊຸມປຶກສາຫາລືຂັ້ນເມືອງ(ຂະແໜງການຂັ້ນແຂວງ ຫລື ນະຄອນເຂົ້າຮ່ວມ), ຂັ້ນແຂວງ ຫລື ນະຄອນ(ຂະແໜງການຂັ້ນສູນກາງເຂົ້າຮ່ວມ);

ຄ). ລົງກວດກາພາກສະໜາມ ຮ່ວມກັບ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ

3) ອົງການປົກຄອງທ້ອງຖິ່ນ ມີໜ້າທີ່ ດັ່ງນີ້:

ກ).ໃຫ້ຄວາມຮ່ວມມື ແລະ ອໍານວຍຄວາມສະດວກໃຫ້ແກ່ຜູ້ພັດທະນາໂຄງການໃນການສໍາຫຼວດ ແລະ ເກັບກໍາຂໍ້ມູນຢູ່ພາກສະໜາມເພື່ອສ້າງບົດລາຍງານ;

ຂ).ດໍາເນີນຂະບວນການປຶກສາຫາລືກັບຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ;

ຄ).ຈັດຕັ້ງໂຄສະນາເຜີຍແຜ່ໃຫ້ປະຊາຊົນເຂົ້າໃຈຈຸດປະສົງຂອງໂຄງການລົງທຶນ, ຜົນປະໂຫຍດທີ່ຈະໄດ້ຮັບ, ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ທີ່ອາດຈະເກີດຂຶ້ນຈາກໂຄງການລົງທຶນ ແລະ ມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບດັ່ງກ່າວ;

ງ).ພິຈາລະນາຮັບຮອງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ກ່ອນອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ຈະອອກໃບຢັ້ງຢືນດ້ານສິ່ງແວດລ້ອມເພື່ອຮັບຮອງແຜນດັ່ງກ່າວ;

4) ຜູ້ພັດທະນາໂຄງການ ມີໜ້າທີ່ ດັ່ງນີ້:

ກ). ປະຕິບັດຕາມຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກສໍາລັບບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ທີ່ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມຮັບຮອງ;

ຂ). ເກັບກໍາຂໍ້ມູນ ກ່ຽວກັບສະພາບລວມຂອງໂຄງການລົງທຶນ ເຊັ່ນ: ດ້ານກາຍະພາບ, ຊີວະພາບ ແລະ ເສດຖະກິດ-ສັງຄົມ ຈາກບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ, ການລົງສໍາຫຼວດຕົວຈິງຢູ່ພາກສະໜາມ ແລະ ການປຶກສາຫາລືກັບປະຊາຊົນ ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ ຂັ້ນບ້ານ, ເມືອງ, ແຂວງ ຫລື ນະຄອນ;

ຄ). ສຶກສາ ແລະ ກໍານົດຜົນກະທົບໂດຍກົງ ແລະ ທາງອ້ອມຕໍ່ປະຊາຊົນໃນເຂດໂຄງການລົງທຶນ ໂດຍເອົາໃຈໃສ່ສຶກສາຜົນກະທົບຕໍ່ສຸຂະພາບ, ການສູນເສຍຊັບສິນ ແລະ ທີ່ຢູ່ອາໄສ, ຜົນກະທົບຕໍ່ຊີວິດການເປັນຢູ່, ການນໍາໃຊ້ຊັບພະຍາກອນທໍາມະຊາດ ແລະ ກໍານົດຜົນກະທົບອື່ນໆຕໍ່ສິ່ງແວດລ້ອມ ແລະ ສັງຄົມ ເປັນຕົ້ນ: ດິນ, ນໍ້າ, ອາກາດ, ປ່າໄມ້ ແລະ ຊີວະນາໆພັນ ລວມທັງມໍລະດົກທາງດ້ານສະຖາປັດຕະຍະກໍາ, ວັດຖຸບູຮານ ແລະ ວັດທະນະທໍາເຂົ້າໃນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ;

ງ). ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ເປັນຕົ້ນ ຂະແໜງຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ຂັ້ນເມືອງ, ຂັ້ນແຂວງ ຫລື ນະຄອນ ຈັດກອງປະຊຸມເຜີຍແຜ່ໃຫ້ຂັ້ນບ້ານ ເພື່ອອະທິບາຍກ່ຽວກັບສະພາບລວມຂອງໂຄງການລົງທຶນ ລວມທັງຜົນປະໂຫຍດທີ່ຈະໄດ້ຮັບ, ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ທີ່ອາດຈະເກີດຈາກໂຄງການດັ່ງກ່າວ, ມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ພ້ອມທັງສັງລວມຄໍາເຫັນຈາກກອງປະຊຸມ ເພື່ອປະກອບເຂົ້າໃນບົດລາຍງານດັ່ງກ່າວ;

ຈ). ສ້າງບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ) ຊຶ່ງລວມທັງການປະເມີນຜົນກະທົບຕໍ່ສຸຂະພາບ ແລະ ມາດຕະການຄຸ້ມຄອງດ້ານສຸຂະພາບ;

ສ). ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ເປັນຕົ້ນ ຂະແໜງຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມຂັ້ນເມືອງ ເພື່ອຈັດກອງປະຊຸມຂັ້ນບ້ານ ໂດຍການເຂົ້າຮ່ວມຂອງປະຊາຊົນ ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ທີ່ມີສ່ວນຮ່ວມອື່ນໆ ເພື່ອຜ່ານຮ່າງບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ສະບັບທຳອິດ ແລ້ວ ປັບປຸງບົດລາຍງານ ແລະ ແຜນການດັ່ງກ່າວຕາມຄຳເຫັນຂອງກອງປະຊຸມ; ຫຼັງຈາກນັ້ນ ນຳໄປ ເຜີຍແຜ່ຄືນໃນຂັ້ນບ້ານໃຫ້ປະຊາຊົນ ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ທີ່ມີສ່ວນ ຮ່ວມອື່ນໆເພື່ອມີຄຳເຫັນ ແລະ ປັບປຸງຄືນກ່ອນການ ຈັດກອງປະຊຸມຂັ້ນເມືອງ

ຊ). ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນ ເປັນຕົ້ນຂະແໜງຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຂັ້ນແຂວງ ຫລື ນະຄອນ ຈັດກອງປະຊຸມຂັ້ນເມືອງ ໂດຍການເຂົ້າຮ່ວມ ຂອງຜູ້ຕາງໜ້າ ຜູ້ໄດ້ຮັບຜົນກະທົບຈາກແຕ່ລະບ້ານທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ, ຂະແໜງການຕ່າງໆທີ່ກ່ຽວຂ້ອງຂັ້ນແຂວງ ຫລື ນະຄອນ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງອື່ນໆ ຂັ້ນເມືອງ ເພື່ອຜ່ານຮ່າງບົດລາຍງານສະບັບປັບປຸງຕາມຄຳເຫັນຂອງກອງ ປະຊຸມຂັ້ນບ້ານ. ບົດລາຍງານສະບັບປັບປຸງຂັ້ນເມືອງ ດັ່ງກ່າວ ຕ້ອງເຮັດເປັນພາສາລາວ ຫລື ພາສາອັງກິດ ຊຶ່ງບົດສັງລວມຫຍໍ້, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ຕ້ອງເຮັດເປັນພາສາລາວ ແລະ ພາສາອັງກິດແລ້ວນຳສະເໜີຕໍ່ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເພື່ອດຳ ເນີນຂະບວນການທົບທວນ;

ຍ). ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດ ຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ທີ່ຈະສະເໜີ ເພື່ອທົບທວນຕ້ອງຄັດຕິດບົດບັນທຶກກອງປະຊຸມປຶກສາຫາລືໃນແຕ່ລະຄັ້ງ ແລະ ຕ້ອງມີລາຍເຊັນຢັ້ງຢືນຂອງຜູ້ພັດທະນາໂຄງການ ແລະ ບໍລິສັດທີ່ປຶກສາທີ່ສ້າງບົດລາຍງານດັ່ງ ກ່າວ.

**ມາດຕາ 13. ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ)**

1) ຜູ້ພັດທະນາໂຄງການຕ້ອງສ້າງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ) ເພື່ອປະກອບເຂົ້າໃນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຊຶ່ງມີເນື້ອໃນ ຕົ້ນຕໍ ດັ່ງລຸ່ມນີ້:

ກ) ແຜນການຕິດຕາມກວດກາການຈັດຕັ້ງປະຕິບັດ, ໜ້າວຽກຕົ້ນຕໍ ແລະ ຜູ້ຮັບຜິດຊອບ ໃນການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ):

– ແຜນການຕິດຕາມກວດກາ ຂອງຜູ້ພັດທະນາໂຄງການ;

– ແຜນການຕິດຕາມກວດກາ ຂອງຂະແໜງການທີ່ກ່ຽວຂ້ອງຂອງລັດ;

ຂ) ມາດຕະການປ້ອງກັນ, ຫລຸດຜ່ອນຜົນກະທົບ, ການແກ້ໄຂບັນຫາ ແລະ ບູລະນະຟື້ນຟູ ສິ່ງແວດລ້ອມ ທີ່ໄດ້ຮັບຜົນກະທົບ ຊຶ່ງກຳນົດໄວ້ໃນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງ ແວດລ້ອມ ຕະຫລອດໄລຍະການກໍ່ສ້າງ ແລະ ໄລຍະດຳເນີນງານ ຂອງໂຄງການລົງທຶນ;

ຄ) ແຜນການຫລີກລ້ຽງ ແລະຫລຸດຜ່ອນຄວາມສ່ຽງ ລວມທັງການປ້ອງກັນ ແລະ ແກ້ໄຂອຸປະຕິເຫດ ຫລື ເຫດການສຸກເສີນທີ່ອາດຈະເກີດຂຶ້ນ ພ້ອມທັງຈັດສັນງົບປະມານໃຫ້ພຽງພໍ ໂດຍກຳນົດງົບປະມານເຂົ້າໃນການປະຕິບັດແຜນການແກ້ໄຂບັນຫາທີ່ອາດເກີດຂຶ້ນ;

ງ) ແຜນການປູກໄມ້, ຟື້ນຟູປ່າ ແລະ ປົກປັກຮັກສາປ່າໄມ້ໃນເຂດຍອດນ້ຳ;

ຈ) ກຳນົດເວລາ ແລະ ງົບປະມານໃນການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ) ພ້ອມທັງກຳນົດກົນໄກການເງິນ ແລະ ງົບປະມານທີ່ຈະນຳໃຊ້ເຂົ້າໃນແຕ່ລະວຽກງານ;

ສ) ໃນກໍລະນີໂຄງການພະລັງງານໄຟຟ້ານ້ຳຕົກ ຕ້ອງມີ: ແຜນການອະນາໄມຊີວະມວນສານອອກຈາກບໍລິເວນອ່າງເກັບນ້ຳ, ແຜນການຄຸ້ມຄອງອ່າງຮັບນ້ຳ, ແຜນການຄຸ້ມຄອງອ່າງເກັບນ້ຳ, ແຜນການຄຸ້ມຄອງ ແລະ ພັດທະນາເຂດລຸ່ມເຂື່ອນ, ແຜນການຄຸ້ມຄອງການປະມົງ ແລະ ແຜນການອື່ນໆ ຖ້າຈຳເປັນ;

ຊ) ໃນກໍລະນີໂຄງການບໍ່ແຮ່ ຕ້ອງມີ: ແຜນປິດບໍ່ ແລະ ຟື້ນຟູເນື້ອທີ່ຂຸດຄົ້ນແຮ່ທາດ ພ້ອມທັງກຳນົດງົບປະມານສຳລັບການຈັດຕັ້ງປະຕິບັດແຜນດັ່ງກ່າວ;

ຍ) ຂໍ້ມູນອື່ນໆ ທີ່ເຫັນວ່າມີຄວາມຈຳເປັນ.

2) ຜູ້ພັດທະນາໂຄງການ ຕ້ອງຈັດຕັ້ງປະຕິບັດ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ) ທີ່ໄດ້ຖືກຮັບຮອງໂດຍອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຢ່າງເຂັ້ມງວດ. ໃນກໍລະນີທີ່ມີການມອບເຫມົາຕໍ່, ຕ້ອງກຳນົດເນື້ອໃນ ແລະ ເງື່ອນໄຂລະອຽດຂອງແຜນການເຂົ້າໃນສັນຍາເພື່ອໃຫ້ຜູ້ຮັບເຫມົາຈັດຕັ້ງປະຕິບັດແຜນການດັ່ງກ່າວຢ່າງຄົບຖ້ວນ;

3) ໃນໄລຍະກໍ່ສ້າງ ແລະ ໄລຍະດຳເນີນໂຄງການ, ຖ້າອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເຫັນວ່າແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ) ບໍ່ໄດ້ກຳນົດບັນຫາ ແລະ ມາດຕະການໃນການຫລຸດຜ່ອນ ແລະ ແກ້ໄຂບັນຫາ ຢ່າງພຽງພໍກັບສະພາບຄວາມເປັນຈິງ ຫລື ບໍ່ສາມາດບັນລຸໄດ້ຕາມຈຸດປະສົງຄາດຫມາຍ, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຈະແຈ້ງເປັນ ລາຍລັກອັກສອນ ກ່ຽວກັບບັນຫາດັ່ງກ່າວ ແລະ ກຳນົດເວລາໃຫ້ຜູ້ພັດທະນາໂຄງການປັບປຸງແຜນການດັ່ງກ່າວແລ້ວສົ່ງໃຫ້ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມເພື່ອພິຈາລະນາຮັບຮອງຄືນໃຫມ່;

4) ຫົກເດືອນ ກ່ອນຈະເຂົ້າສູ່ໄລຍະດຳເນີນໂຄງການ ຜູ້ພັດທະນາໂຄງການ ຕ້ອງສະຫລຸບຕີລາຄາຜົນການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ) ໃນໄລຍະກໍ່ສ້າງ ຫລື ໄລຍະ ສຳຫລວດ-ຂຸດຄົ້ນ ພ້ອມທັງ ປັບປຸງແຜນການຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມ(ຜຄສລ) ໃຫ້ສອດຄ່ອງສຳລັບໄລຍະດຳເນີນໂຄງການ ແລ້ວນຳສະເຫນີ ອົງການ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາຮັບຮອງກ່ອນທີ່ຂະແຫນງການຮັບຜິດຊອບໂຄງການລົງທຶນ ຈະອອກໃບອະນຸຍາດດຳເນີນການ.ໃນໄລຍະດຳເນີນໂຄງການ, ຜູ້ພັດທະນາໂຄງການ ຕ້ອງທົບທວນ ແລະ ປັບປຸງແຜນການຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມ (ຜຄສລ) ໃນແຕ່ລະໄລຍະ 2 - 5 ປີ (ໄລຍະເວລາຂອງການທົບທວນ ແລະປັບປຸງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ) ແມ່ນຂຶ້ນ

ກັບລະດັບຄວາມສະຫລັບສັບຊ້ອນຂອງໂຄງການລົງທຶນ ຊຶ່ງຈະກຳນົດໄວ້ໃນໃບຢັ້ງຢືນດ້ານສິ່ງແວດລ້ອມ) ແລ້ວນຳສະເຫນີຕໍ່ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມເພື່ອພິຈາລະນາຮັບຮອງ;

5) ໃນກໍລະນີໂຄງການບໍ່ແຮ່, ກ່ອນການປິດບໍ່ ຜູ້ພັດທະນາໂຄງການ ຕ້ອງປັບປຸງແຜນປິດບໍ່ ແລະ ຟື້ນຟູເນື້ອທີ່ຂຸດຄົ້ນແຮ່ທາດ ແລ້ວນຳສະເຫນີຕໍ່ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາຮັບຮອງ ກ່ອນຈັດຕັ້ງປະຕິບັດແຜນການດັ່ງກ່າວ.

ມາດຕາ 14. ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ)

1) ຜູ້ພັດທະນາໂຄງການລົງທຶນ ຕ້ອງສ້າງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ) ເພື່ອປະກອບເປັນສ່ວນຫນຶ່ງຂອງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ໂດຍມີເນື້ອໃນຕົ້ນຕໍດັ່ງລຸ່ມນີ້:

ກ) ມາດຕະການປ້ອງກັນ, ຫລຸດຜ່ອນຜົນກະທົບທາງກົງ ແລະ ທາງອ້ອມຕໍ່ສັງຄົມ ຂອງໂຄງການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຕະຫລອດໄລຍະກໍ່ສ້າງ, ໄລຍະດຳເນີນກິດຈະການ ແລະ ໄລຍະສິ້ນສຸດໂຄງການ;

ຂ) ມາດຕະການປ້ອງກັນ ຫລື ຫລຸດຜ່ອນຄວາມສ່ຽງ ລວມທັງການປ້ອງກັນ ແລະ ແກ້ໄຂອຸປະຕິເຫດ ຫລື ເຫດການສຸກເສີນ ທີ່ອາດຈະເກີດຂຶ້ນ ພ້ອມທັງຈັດສັນງົບປະມານໃຫ້ພຽງພໍ ແລະ ກຳນົດແຫລ່ງງົບປະມານ ເພື່ອປະຕິບັດແຜນການ ແລະ ແກ້ໄຂບັນຫາດັ່ງກ່າວ;

ຄ) ມາດຕະການໃນການທົດແທນຄ່າເສຍຫາຍ, ການຍົກຍ້າຍຈັດສັນ ແລະ ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ;

ງ) ຮ່າງແຜນພັດທະນາສັງຄົມ ສຳລັບໄລຍະຫລັງການປິດບໍ່ ແລະ ການສິ້ນສຸດໂຄງການລົງທຶນ;

ຈ) ແຜນການຕິດຕາມກວດກາການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ);

ສ) ແຜນການຕິດຕາມກວດກາ ຂອງຜູ້ພັດທະນາໂຄງການ ແລະ ແຜນການຕິດຕາມກວດກາຂອງບັນດາຂະແຫນງການທີ່ກ່ຽວຂ້ອງຂອງລັດ;

ຊ) ການຈັດຕັ້ງ ແລະ ຄວາມຮັບຜິດຊອບຂອງພາກສ່ວນ ທີ່ຈະຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ແລະ ແຜນການອື່ນໆທີ່ກ່ຽວຂ້ອງ;

ຍ) ກຳນົດເວລາ ແລະ ງົບປະມານໃນການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ພ້ອມທັງກົນໄກການເງິນ ແລະ ການຈັດສັນງົບປະມານທີ່ຈະນຳໃຊ້ເຂົ້າໃນແຕ່ລະຫນ້າວຽກ ຫລື ກິດຈະກຳ;

ດ) ຂໍ້ມູນອື່ນໆທີ່ເຫັນວ່າມີຄວາມຈຳເປັນ.

2) ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ຕ້ອງສອດຄ່ອງກັບດຳລັດ ແລະ ລະບຽບການ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນຈາກໂຄງການພັດທະນາ ຊຶ່ງປະກອບດ້ວຍແຜນການຍົກຍ້າຍຈັດສັນປະຊາຊົນ ຜູ້ໄດ້ຮັບຜົນກະ

ທົບຈາກໂຄງການລົງທຶນ, ແຜນພັດທະນາສັງຄົມ ແລະ ຟື້ນຟູຊີວິດການເປັນຢູ່ ໂດຍເອົາໃຈໃສ່ບັນຫາດ້ານສຸຂະພາບຂອງປະຊາຊົນຜູ້ໄດ້ຮັບຜົນກະທົບ ແລະ ອື່ນໆ;

3) ຜູ້ພັດທະນາໂຄງການ ຕ້ອງຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ທີ່ຖືກຮັບຮອງໂດຍອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມຢ່າງເຂັ້ມງວດໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍສະເພາະຄະນະກຳມະການຍົກຍ້າຍຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່. ໃນກໍລະນີທີ່ມີການຮັບເຫມົາຕໍ່, ຜູ້ພັດທະນາໂຄງການຕ້ອງກຳນົດເນື້ອໃນ ແລະ ເງື່ອນໄຂລະອຽດ ຂອງແຜນການຄຸ້ມຄອງ ແລະ ຕິດຕາມ ກວດກາສັງຄົມ(ຜຄສຄ)ເຂົ້າໃນສັນຍາ ເພື່ອໃຫ້ຜູ້ຮັບເຫມົາຈັດຕັ້ງປະຕິບັດແຜນການດັ່ງກ່າວ ຢ່າງຄົບຖ້ວນ;

4) ທຸກເດືອນ ກ່ອນຈະເຂົ້າສູ່ໄລຍະດຳເນີນໂຄງການ ຜູ້ພັດທະນາໂຄງການ ຕ້ອງສະຫລຸບຕີລາຄາຜົນການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ໃນໄລຍະກໍ່ສ້າງ ຫລື ໄລຍະສຳຫລວດ-ຂຸດຄົ້ນ. ຖ້າມີຄວາມຈຳເປັນຕ້ອງປັບປຸງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ໃຫ້ສອດຄ່ອງສຳລັບໄລຍະດຳເນີນໂຄງການແລ້ວນຳສະເຫນີ ຕໍ່ ອົງການ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາຮັບຮອງກ່ອນທີ່ຂະແຫນງການຮັບຜິດຊອບໂຄງການລົງທຶນ ຈະອອກໃບອະນຸຍາດດຳເນີນການ. ໃນໄລຍະດຳເນີນໂຄງການ, ຜູ້ພັດທະນາໂຄງການ ຕ້ອງທົບທວນ ແລະ ປັບປຸງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ໃນແຕ່ລະໄລຍະ 2 - 5 ປີ (ໄລຍະເວລາຂອງການທົບທວນ ແລະ ປັບປຸງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ແມ່ນຂຶ້ນກັບລະດັບຄວາມສະຫລັບສັບຊ້ອນຂອງໂຄງການລົງທຶນ ແລະ ໄລຍະຟື້ນຟູ ຊີວິດການເປັນຢູ່ ຊຶ່ງຈະກຳນົດໄວ້ໃນໃບຢັ້ງຢືນດ້ານສິ່ງແວດລ້ອມ) ແລ້ວນຳສະເຫນີ ຕໍ່ ອົງການ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາຮັບຮອງ;

5) ໃນໄລຍະກໍ່ສ້າງ ແລະ ໄລຍະດຳເນີນໂຄງການ, ຖ້າອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເຫັນວ່າແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ຍັງບໍ່ໄດ້ກຳນົດບັນຫາ ແລະ ມາດຕະການໃນການຫລຸດຜ່ອນ ແລະ ແກ້ໄຂບັນຫາຢ່າງພຽງພໍກັບສະພາບຄວາມເປັນຈິງ ຫລື ບໍ່ສາມາດບັນລຸໄດ້ຕາມຈຸດປະສົງຄາດຫມາຍ, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຈະແຈ້ງເປັນລາຍລັກອັກສອນກ່ຽວກັບບັນຫາ ດັ່ງກ່າວ ແລະ ກຳນົດເວລາໃຫ້ຜູ້ພັດທະນາໂຄງການປັບປຸງແຜນການດັ່ງກ່າວ ແລ້ວນຳສົ່ງໃຫ້ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເພື່ອພິຈາລະນາຮັບຮອງຄືນໃຫມ່.

6) ໃນກໍລະນີ ໂຄງການບໍ່ແຮ່, ຜູ້ພັດທະນາໂຄງການ ຕ້ອງປັບປຸງແຜນພັດທະນາສັງຄົມ ສຳລັບໄລຍະຫລັງການປິດບໍ່ໃຫ້ເປັນສະບັບສົມບູນ ແລະ ແຜນການດັ່ງກ່າວຕ້ອງໄດ້ຖືກຮັບຮອງຈາກອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ກ່ອນສິ້ນສຸດໂຄງການ.

**ມາດຕາ 15. ການທົບທວນບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ)**

ການທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ,ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ) ຕ້ອງດຳເນີນຕາມຂັ້ນຕອນ ດັ່ງນີ້:

1) ຜູ້ພັດທະນາໂຄງການ ຕ້ອງສົ່ງຄຳຮ້ອງ ພ້ອມດ້ວຍບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ສະບັບປັບປຸງ ຫລັງຈາກກອງປະຊຸມປຶກສາຫາລືຂັ້ນເມືອງ ຈຳນວນ 1 ຊຸດ ໃຫ້ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເພື່ອທົບທວນ ແລະ ພິຈາລະນາອອກໃບຢັ້ງຢືນດ້ານສິ່ງແວດລ້ອມ;

2) ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ດຳເນີນການກວດກາຄວາມຖືກຕ້ອງຄົບຖ້ວນຕາມຂອບເຂດໜ້າວຽກ ຂອງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ພາຍໃນ 15 ວັນລັດຖະການ ແລ້ວແຈ້ງໃຫ້ຜູ້ພັດທະນາໂຄງການເປັນລາຍລັກອັກສອນ ດັ່ງນີ້:

ກ)ໃນກໍລະນີບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ) ຫາກຖືກຕ້ອງ, ຄົບຖ້ວນ, ຜູ້ພັດທະນາໂຄງການ ຕ້ອງສົ່ງບົດລາຍງານ ແລະ ແຜນການດັ່ງກ່າວ ຈຳນວນ 15 ຊຸດ ພ້ອມດ້ວຍບົດລາຍງານໃນຮູບແບບເອເລັກໂຕຣນິກ ໃຫ້ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ;

ຂ) ໃນກໍລະນີບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ,ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ) ຫາກບໍ່ຖືກຕ້ອງ, ບໍ່ຄົບຖ້ວນ, ຜູ້ພັດທະນາໂຄງການຕ້ອງປັບປຸງ ຫລື ສ້າງບົດລາຍງານ ແລະ ແຜນການຄືນໃໝ່.

3) ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ໂດຍທົ່ວໄປພາຍໃນ 95 ວັນລັດຖະການ ແລະ 120 ວັນລັດຖະການ ສຳລັບໂຄງການລົງທຶນທີ່ມີຄວາມສະຫລັບສັບຊ້ອນ ຊຶ່ງຈະນັບແຕ່ວັນທີ່ຜູ້ພັດທະນາໂຄງການ ໄດ້ສະເໜີເອກະສານຕາມຂໍ້ 2 (ກ) ເທິງນີ້ເປັນຕົ້ນໄປ ໂດຍບໍ່ນັບໄລຍະເວລາທີ່ຜູ້ພັດທະນາໂຄງການຮັບເອກະສານກັບໄປປັບປຸງຄືນໃໝ່ ຊຶ່ງມີຂັ້ນຕອນ ດັ່ງນີ້:

ກ) ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ສົ່ງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ພາຍໃນ 5 ວັນລັດຖະການ ໃຫ້ຂະແໜງການທີ່

ຮັບຜິດຊອບໂຄງການ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອມີຄໍາເຫັນ ພາຍໃນ 30 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານ. ຖ້າບໍ່ໄດ້ຮັບຄໍາເຫັນຕາມໄລຍະເວລາດັ່ງກ່າວ ຈະຖືວ່າສະລະສິດໃນການມີຄໍາເຫັນ;

ຂ) ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ຈັດກອງປະຊຸມວິຊາການ ພາຍໃນ 10 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານ ເພື່ອຮັບຟັງຜູ້ພັດທະນາໂຄງການສະເໜີໂດຍຫຍໍ້ ກ່ຽວກັບບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ) ໂດຍການເຂົ້າຮ່ວມ ຂອງຂະແໜງການທີ່ກ່ຽວຂ້ອງ;

ຄ) ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ລົງກວດກາຕົວຈິງພາກສະໜາມ ພາຍໃນ 20 ວັນລັດຖະການ ຫລັງຈາກການສະເໜີໂດຍຫຍໍ້ ຕາມຂໍ້ 3 (ຂ) ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

ງ) ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ຈັດກອງປະຊຸມວິຊາການຮ່ວມກັບຜູ້ພັດທະນາໂຄງການ ໂດຍການເຂົ້າຮ່ວມ ຂອງອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການ ທີ່ກ່ຽວຂ້ອງເພື່ອປະກອບຄໍາເຫັນຕໍ່ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ພາຍໃນ 5 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບຄໍາເຫັນຈາກຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງຕາມຂໍ້ 3 (ກ); ຫລັງຈາກນັ້ນ ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ຈະສັງລວມຄໍາເຫັນເປັນລາຍລັກອັກສອນ ໃຫ້ຜູ້ພັດທະນາໂຄງການປັບປຸງບົດລາຍງານ ແລະ ແຜນການດັ່ງກ່າວ ແລ້ວສົ່ງໃຫ້ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມເພື່ອພິຈາລະນາ;

ຈ) ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ແຈ້ງເປັນລາຍລັກອັກສອນໃຫ້ຜູ້ພັດທະນາໂຄງການ ເພື່ອປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ຈັດກອງປະຊຸມປຶກສາຫາລື ຂັ້ນແຂວງ ຫລື ນະຄອນ ຫລັງຈາກສໍາເລັດການທົບທວນບົດລາຍງານ ສະບັບປັບປຸງ ຕາມຂໍ້ (ງ) ເທິງນີ້. ຜູ້ພັດທະນາໂຄງການຕ້ອງປັບປຸງບົດລາຍງານ ແລະ ແຜນການດັ່ງກ່າວ ຕາມບົດບັນທຶກຂອງກອງປະຊຸມປຶກສາຫາລືຂັ້ນແຂວງ ຫລື ນະຄອນ ໃຫ້ເປັນສະບັບສຸດທ້າຍ ແລ້ວສົ່ງໃຫ້ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ພິຈາລະນາອອກໃບຢັ້ງຢືນດ້ານສິ່ງແວດລ້ອມ;

ສ) ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ສະບັບສຸດທ້າຍ ແລ້ວສົ່ງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ໃຫ້ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ພິຈາລະນາຮັບຮອງພາຍໃນ 15 ວັນລັດຖະການ ກ່ອນຈະອອກໃບຢັ້ງຢືນດ້ານສິ່ງແວດລ້ອມ. ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ຈະພິຈາລະນາພາຍໃນ 15 ວັນລັດຖະການ ພາຍຫລັງໄດ້ຮັບການຮັບຮອງ ຈາກອົງການປົກຄອງທ້ອງຖິ່ນ ຕາມກໍລະນີໃດໜຶ່ງ ດັ່ງນີ້:

1.) ອອກໃບຢັ້ງຢືນດ້ານສິ່ງແວດລ້ອມ ເພື່ອຮັບຮອງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ຫລື ແຈ້ງເປັນລາຍລັກອັກສອນໃຫ້ຜູ້ພັດທະນາໂຄງການປັບປຸງບົດລາຍງານ ແລະ ແຜນການດັ່ງກ່າວ;

2) ປະຕິເສດບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ) ຂອງໂຄງການລົງທຶນ ຍ້ອນສາເຫດໃດໜຶ່ງ ດັ່ງນີ້:

ກ) ຂໍ້ມູນໃນບົດລາຍງານບໍ່ຖືກຕ້ອງຕາມຄວາມເປັນຈິງ, ມີການປິດບັງ ຫລື ເຊື່ອງຊ້ອນຄວາມສ່ຽງ ແລະ ຜົນກະທົບຕ່າງໆດ້ານສິ່ງແວດລ້ອມ ແລະ ສັງຄົມ ອັນຮ້າຍແຮງ ທີ່ອາດຈະເກີດຂຶ້ນ;

ຂ) ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຍັງຂາດການສຶກສາແບບຮອບດ້ານ ເປັນຕົ້ນ ຄວາມສ່ຽງ ແລະ ຜົນກະທົບທີ່ອາດຈະເກີດຂຶ້ນ;

ຄ) ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ບໍ່ໄດ້ມາຈາກການສຶກສາຕົວຈິງໂດຍໂຄງການລົງທຶນເອງ ແຕ່ເປັນການສຳເນົາຈາກໂຄງການລົງທຶນອື່ນ, ຊຶ່ງມີຂໍ້ມູນພິສູດໃຫ້ເຫັນວ່າມີການສຳເນົາແທ້;

ງ) ຂາດຂໍ້ມູນທາງດ້ານວິທະຍາສາດ ເພື່ອພິສູດຄວາມຊັດເຈນຂອງຜົນກະທົບທີ່ໄດ້ກຳນົດໄວ້;

ຈ) ຂໍ້ມູນບໍ່ຄົບຖ້ວນຢູ່ໃນແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ) ແລະ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ);

ສ)ໂຄງການລົງທຶນຈະສ້າງຜົນກະທົບດ້ານລົບຫລາຍກວ່າດ້ານບວກຊຶ່ງບໍ່ສາມາດແກ້ໄຂໄດ້;

ຊ) ຜູ້ພັດທະນາໂຄງການບໍ່ປະຕິບັດຕາມລະບຽບກົດໝາຍ, ບົດແນະນຳຕ່າງໆ ແລະ ບໍ່ໄດ້ດຳເນີນຕາມຂະບວນການມີສ່ວນຮ່ວມ ຢ່າງຖືກຕ້ອງ.

**ມາດຕາ 16. ການທົບທວນບົດລາຍງານໂຄງການລົງທຶນທີ່ມີຄວາມສະຫລັບສັບຊ້ອນ**

ສຳລັບໂຄງການລົງທຶນ ທີ່ມີຄວາມສະຫລັບສັບຊ້ອນ ຊຶ່ງຈຳເປັນຕ້ອງມີຜູ້ຊ່ຽວຊານສະເພາະໃນດ້ານຕ່າງໆ ເພື່ອຊ່ວຍທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ), ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຕ້ອງດຳເນີນການ ດັ່ງນີ້:

1) ແຕ່ງຕັ້ງຄະນະຊ່ຽວຊານທົບທວນບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ພາຍໃນ 30 ວັນລັດຖະການ ນັບແຕ່ວັນທີ່ຜູ້ພັດທະນາໂຄງການໄດ້ສະເໜີເອກະສານຄົບຖ້ວນຕາມມາດຕາ 15 ຂໍ້ 2 (ກ) ໂດຍຄັດເລືອກເອົາທີ່ປຶກສາພາຍໃນ ຫລື ຕ່າງປະເທດ ປະກອບເຂົ້າໃນຄະນະຊ່ຽວຊານດັ່ງກ່າວ;

2) ຄະນະຊ່ຽວຊານທົບທວນບົດລາຍງານ ປະກອບດ້ວຍຜູ້ຊ່ຽວຊານໃນແຕ່ລະດ້ານຈໍານວນໜຶ່ງຕາມຄວາມຕ້ອງການຕົວຈິງ ຊຶ່ງຕ້ອງບໍ່ມີສ່ວນກ່ຽວຂ້ອງ ແລະ ບໍ່ມີຜົນປະໂຫຍດທາງກິງ ຫລື ທາງອ້ອມກັບໂຄງການລົງທຶນ. ຄະນະຊ່ຽວຊານດັ່ງກ່າວມີໜ້າທີ່ທົບທວນ ແລະ ປະກອບຄໍາເຫັນຕໍ່ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ) ເປັນລາຍລັກອັກສອນໃຫ້ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ພາຍໃນ 30 ວັນລັດຖະການ ແລະ ຕ້ອງຮັກສາຂໍ້ມູນດັ່ງກ່າວເປັນຄວາມລັບ;

3) ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ພາຍໃນ 120 ວັນລັດຖະການ ນັບແຕ່ວັນທີ່ຜູ້ພັດທະນາໂຄງການ ໄດ້ສະເໜີເອກະສານຄົບຖ້ວນຕາມມາດຕາ 15 ຂໍ້ 2 (ກ) ໂດຍບໍ່ນັບໄລຍະເວລາທີ່ຜູ້ພັດທະນາໂຄງການຮັບເອກະສານກັບໄປປັບປຸງຄືນໃໝ່. ຂັ້ນຕອນການທົບທວນບົດລາຍງານ ແລະ ແຜນການດັ່ງກ່າວ ໃຫ້ດໍາເນີນຕາມມາດຕາ 15 ຂອງດໍາລັດສະບັບນີ້.

## ໝວດທີ 5
## ໃບຢັ້ງຢືນດ້ານສິ່ງແວດລ້ອມ

### ມາດຕາ 17. ການອອກໃບຢັ້ງຢືນດ້ານສິ່ງແວດລ້ອມ

ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ເປັນຜູ້ອອກໃບຢັ້ງຢືນດ້ານສິ່ງແວດລ້ອມ ເພື່ອຮັບຮອງບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 10 ແລະ ມາດຕາ 15 ຂອງດໍາລັດສະບັບນີ້.

ບົນພື້ນຖານການຢັ້ງຢືນ ຈາກອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ໂດຍເອກະພາບກັບຂະແໜງການຮັບຜິດຊອບໂຄງການລົງທຶນ, ອົງການປົກຄອງທ້ອງຖິ່ນ ສາມາດອອກໃບຢັ້ງຢືນດ້ານສິ່ງແວດລ້ອມ ເພື່ອຮັບຮອງບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ.

ໃບຢັ້ງຢືນດ້ານສິ່ງແວດລ້ອມ ອາດກໍານົດເງື່ອນໄຂຈໍານວນໜຶ່ງ ຊຶ່ງເປັນພັນທະສໍາລັບຜູ້ພັດທະນາໂຄງການ.

### ມາດຕາ 18. ອາຍຸຂອງໃບຢັ້ງຢືນດ້ານສິ່ງແວດລ້ອມ

ໃບຢັ້ງຢືນດ້ານສິ່ງແວດລ້ອມ ມີຜົນສັກສິດນໍາໃຊ້ຕະຫລອດໄລຍະສໍາປະທານໂຄງການລົງທຶນ ຫລື ຕະຫຼອດໄລຍະໂຄງການລົງທຶນ;

ກໍລະນີໂຄງການລົງທຶນ ໄດ້ຮັບໃບຢັ້ງຢືນດ້ານສິ່ງແວດລ້ອມ ແລ້ວ ແຕ່ບໍ່ດໍາເນີນການກໍ່ສ້າງພາຍໃນກໍານົດເວລາ 2 ປີ ຈະຖືວ່າໃບຢັ້ງຢືນດັ່ງກ່າວໝົດຄຸນຄ່າ ແລະ ບໍ່ສາມາດນໍາໃຊ້ໄດ້.

ຖ້າວ່າຜູ້ພັດທະນາໂຄງການມີຈຸດປະສົງຈະສືບຕໍ່ໂຄງການລົງທຶນ,ໃນໄລຍະ 3 ເດືອນ ກ່ອນທີ່ໃບຢັ້ງຢືນດັ່ງກ່າວຈະຫມົດອາຍຸ, ຜູ້ພັດທະນາໂຄງການ ສາມາດສະເຫນີ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ພິຈາລະນາຄືນໃຫມ່;

ພາຍຫລັງໂຄງການລົງທຶນໄດ້ຮັບໃບຢັ້ງຢືນດ້ານສິ່ງແວດລ້ອມແລ້ວ, 6 ເດືອນ ກ່ອນສິ້ນສຸດໄລຍະກໍ່ສ້າງ ຜູ້ພັດທະນາໂຄງການຕ້ອງສະຫລຸບຕີລາຄາຜົນການຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫລື ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ໃນໄລຍະກໍ່ສ້າງ ແລະ ດຳເນີນໂຄງການລົງທຶນ ພ້ອມທັງປັບປຸງມາດຕະການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫລື ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ສຳລັບໄລຍະດຳເນີນໂຄງການ ແລ້ວນຳສະເຫນີອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ພິຈາລະນາຮັບຮອງ. ໃນໄລຍະດຳເນີນໂຄງການ, ຜູ້ພັດທະນາໂຄງການ ຕ້ອງທົບທວນ ແລະ ປັບປຸງມາດຕະການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫລື ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ໃນແຕ່ລະໄລຍະ 2 - 5 ປີ (ໄລຍະເວລາຂອງການທົບທວນ ແລະ ປັບປຸງ ແມ່ນຂຶ້ນກັບລະດັບຄວາມສະຫລັບສັບຊ້ອນຂອງໂຄງການລົງທຶນ) ແລ້ວນຳສະເຫນີອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ພິຈາລະນາຮັບຮອງ.

**ມາດຕາ 19. ການອອກໃບຢັ້ງຢືນດ້ານສິ່ງແວດລ້ອມ ໃຫ້ໂຄງການລົງທຶນທີ່ກຳລັງເຄື່ອນໄຫວກິດຈະການ**

ສຳລັບໂຄງການລົງທຶນທີ່ໄດ້ດຳເນີນກິດຈະການແລ້ວແຕ່ບໍ່ມີໃບຢັ້ງຢືນດ້ານສິ່ງແວດລ້ອມກ່ອນດຳລັດສະບັບນີ້ ມີຜົນສັກສິດໃຊ້ບັງຄັບ ຕ້ອງດຳເນີນການ ດັ່ງນີ້:

ກ) ໃຫ້ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຂຶ້ນບັນຊີທົ່ວຫນ່ວຍທຸລະກິດຕາມປະເພດ ແລະ ຂະໜາດຂອງໂຄງການລົງທຶນ ໃນກຸ່ມທີ່ 1 ຫລື ກຸ່ມທີ່ 2, ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ແລ້ວສົ່ງໃຫ້ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ພາຍໃນ 90 ວັນລັດຖະການ ຫລັງຈາກດຳລັດສະບັບນີ້ມີຜົນສັກສິດໃຊ້ບັງຄັບ;

ຂ) ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ພິຈາລະນາຕາມກໍລະນີໃດຫນຶ່ງໂດຍອີງຕາມລະດັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຂອງແຕ່ລະໂຄງການລົງທຶນ ດັ່ງນີ້:

– ສຳລັບໂຄງການລົງທຶນທີ່ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ແຈ້ງໃຫ້ຜູ້ພັດທະນາໂຄງການສືບຕໍ່ດຳເນີນກິດຈະການ;

– ສຳລັບໂຄງການລົງທຶນທີ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ອີງຕາມປະເພດ ແລະ ຂະໜາດຂອງໂຄງການລົງທຶນ ໃນກຸ່ມທີ່ 1 ຫລື ກຸ່ມທີ່ 2, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ແຈ້ງເປັນລາຍລັກອັກສອນໃຫ້ຜູ້ພັດທະນາໂຄງການທີ່ກ່ຽວຂ້ອງ ສ້າງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ໃຫ້ສຳເລັດພາຍໃນ 90 ວັນລັດຖະການ ສຳລັບ ໂຄງການລົງທຶນ ໃນກຸ່ມທີ່ 1 ແລະ 120 ວັນລັດຖະການ ສຳລັບ ໂຄງການລົງທຶນ ໃນກຸ່ມທີ່ 2 ຫລັງຈາກໄດ້ຮັບແຈ້ງການ.

ຖ້າວ່າການຈັດຕັ້ງປະຕິບັດຫາກບໍ່ສຳເລັດ ຕາມກຳນົດເວລາທີ່ໄດ້ວາງໄວ້, ໂຄງການລົງທຶນດັ່ງກ່າວຈະຖືກປະຕິບັດຕາມມາດຕະການທີ່ໄດ້ກຳນົດໄວ້ໃນມາດຕາ 37, 38, 39, 40 ຂອງດຳລັດສະບັບນີ້ ແລ້ວແຕ່ກໍລະນີ.

ໂຄງການລົງທຶນ ຊຶ່ງອີງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມໄດ້ຮັບຮອງເອົາຂອບເຂດການສຶກສາ ແລະ ຂອບເຂດໜ້າວຽກ ສຳລັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ໂຄງການລົງທຶນທີ່ໄດ້ຍື່ນບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແຕ່ຍັງບໍ່ທັນໄດ້ຮັບໃບຢັ້ງຢືນດ້ານສິ່ງແວດລ້ອມ ກ່ອນດຳລັດສະບັບນີ້ມີຜົນສັກສິດໃຊ້ບັງຄັບ, ຜູ້ພັດທະນາໂຄງການດັ່ງກ່າວສາມາດປະຕິບັດຕາມ ລະບຽບການ ວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຢູ່ ສປປລາວ ສະບັບເລກທີ 1770/ອວຕສ.ສນຍ, ລົງວັນທີ 3 ຕຸລາ 2000 ຫລື ດຳລັດສະບັບນີ້.

## ໝວດທີ 6
## ພັນທະໃນການໃຊ້ຈ່າຍ ສຳລັບວຽກງານ ການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການຄຸ້ມຄອງຄ່າທຳນຽມ ແລະ ຄ່າບໍລິການ

### ມາດຕາ 20. ພັນທະໃນການໃຊ້ຈ່າຍສຳລັບວຽກງານ ການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ

ຜູ້ພັດທະນາໂຄງການ ຕ້ອງຮັບຜິດຊອບທຸກການໃຊ້ຈ່າຍໃນການດຳເນີນຂະບວນການສ້າງ ແລະ ທົບທວນບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ລວມທັງການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາມາດຕະການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫລື ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ດັ່ງນີ້:

1) ການລົງກວດກາພາກສະໜາມ;

2) ກອງປະຊຸມເຜີຍແຜ່ ກ່ຽວກັບໂຄງການລົງທຶນ, ກອງປະຊຸມປຶກສາຫາລືກ່ຽວກັບບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ໃນແຕ່ລະຂັ້ນ (ຂັ້ນບ້ານ, ເມືອງ, ແຂວງ ຫລື ນະຄອນ);

3) ການຈ່າຍຄ່າທຳນຽມ ແລະ ຄ່າບໍລິການຕາມລະບຽບກົດໝາຍ;

4) ການຈັດຕັ້ງປະຕິບັດ ມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫລື ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ແລະ ການຕິດຕາມກວດກາ;

5) ການວ່າຈ້າງຄະນະຊ່ຽວຊານພາຍໃນ ແລະ/ຫລື ຕ່າງປະເທດ ເພື່ອທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ);

6) ການສ້າງຄວາມເຂັ້ມແຂງ ແລະ ສະໜອງອຸປະກອນ, ພາຫະນະທີ່ຈຳເປັນໃນການຕິດຕາມກວດກາວຽກງານການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ໃຫ້ແກ່ພະນັກງານຂອງພາກລັດຖະບານ ໃນລະດັບສູນກາງ ແລະ ທ້ອງຖິ່ນ;

7) ການລົງຕິດຕາມກວດກາ ກວດການ ປົກກະຕິ ແລະ ໃນກໍລະນີເກີດເຫດການສຸກເສີນດ້ານສິ່ງແວດລ້ອມ ແລະ ສັງຄົມ.

**ມາດຕາ 21. ຄ່າທຳນຽມ ແລະ ຄ່າບໍລິການ**

ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຫລື ອົງການປົກຄອງທ້ອງຖິ່ນ ທີ່ອອກໃບຢັ້ງຢືນດ້ານສິ່ງແວດລ້ອມ ມີໜ້າທີ່ເກັບຄ່າທຳນຽມ ແລະ ຄ່າບໍລິການດ້ານສິ່ງແວດລ້ອມ ແລະ ສັງຄົມ ຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ ສະບັບເລກທີ 03/ປປທ, ລົງວັນທີ 19 ພະຈິກ 2008 ດັ່ງນີ້:

– ຄ່າທຳນຽມ ແມ່ນມອບເຂົ້າງົບປະມານແຫ່ງລັດທັງໝົດ;

– ຄ່າບໍລິການວິຊາການ ຕ້ອງຄິດໄລ່, ໄລ່ລຽງລາຍຮັບ ແລະ ລາຍຈ່າຍ ສັງລວມເຂົ້າໃນແຜນງົບປະມານປະຈຳສົກປີ ຂອງອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຫລື ອົງການປົກຄອງທ້ອງຖິ່ນ ໂດຍປະຕິບັດຕາມລະບຽບການເງິນແຫ່ງລັດ ແລະ ພາຍໃຕ້ການຄຸ້ມຄອງຂອງອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຫລື ອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການເງິນ.

## ພາກທີ III
## ການຄຸ້ມຄອງ ແລະ ຕິດຕາມກວດກາ

**ມາດຕາ 22. ການຈັດຕັ້ງຄຸ້ມຄອງ ແລະ ຕິດຕາມກວດກາ**

ການຈັດຕັ້ງຄຸ້ມຄອງ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫລື ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ຂອງໂຄງການລົງທຶນ ປະກອບດ້ວຍ:

ກ) ການຕິດຕາມກວດກາ ໂດຍຜູ້ພັດທະນາໂຄງການ;

ຂ) ການຕິດຕາມກວດກາ ໂດຍອົງການຈັດຕັ້ງຂອງລັດຖະບານ;

ຄ) ການຕິດຕາມກວດກາພາຍນອກ.

**ມາດຕາ 23. ການຕິດຕາມກວດກາ ໂດຍຜູ້ພັດທະນາໂຄງການ**

ຜູ້ພັດທະນາໂຄງການ ຕ້ອງດຳເນີນການ ດັ່ງນີ້:

1) ສຳລັບ ໂຄງການລົງທຶນໃນກຸ່ມທີ່ 1: ດຳເນີນການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ດ້ວຍຕົນເອງ ແລະ ລາຍງານໃຫ້ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ, ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ເປັນປະຈຳ;

2) ສຳລັບ ໂຄງການລົງທຶນໃນກຸ່ມທີ່ 2 : ຕ້ອງສ້າງຕັ້ງຫ້ອງການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງຕົນ ເພື່ອເຮັດໜ້າທີ່ຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ ຜົນການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ) ແລ້ວລາຍງານໃຫ້ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ, ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນເປັນປະຈຳ.

**ມາດຕາ 24. ການຕິດຕາມກວດກາ ໂດຍອົງການຈັດຕັ້ງຂອງລັດຖະບານ**

ອົງການຈັດຕັ້ງຂອງລັດຖະບານ ຕ້ອງດຳເນີນການ ດັ່ງນີ້:

1) ສຳລັບໂຄງການລົງທຶນໃນກຸ່ມທີ່ 1 :

– ອົງການຈັດຕັ້ງທີ່ທົບທວນບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ມີໜ້າທີ່ຕິດຕາມກວດກາ ຜົນການຈັດຕັ້ງປະຕິບັດມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໂດຍນຳໃຊ້ງົບປະມານທີ່ກຳນົດໄວ້ໃນບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ແລ້ວລາຍງານໃຫ້ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນ ເປັນປະຈຳ;

– ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ມີໜ້າທີ່ກວດກາ ກວດການການຈັດຕັ້ງປະຕິບັດມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ລົງກວດກາດ່ວນໃນກໍລະນີສຸກເສີນ ໂດຍປະສານສົມທົບກັບ ຂະແໜງການ ແລະ ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວລາຍງານໃຫ້ຂັ້ນເທິງ.

2) ສຳລັບໂຄງການລົງທຶນໃນກຸ່ມທີ່ 2 :

– ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ມີໜ້າທີ່ຕິດຕາມກວດກາການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ) ປະຈຳ 6 ເດືອນ ຫລື ຕາມຄວາມຈຳເປັນ ໂດຍປະສານສົມທົບກັບ ຂະແໜງການ ແລະ ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວລາຍງານໃຫ້ຂັ້ນເທິງເປັນປົກກະຕິ;

– ຄະນະກຳມະການສິ່ງແວດລ້ອມແຫ່ງຊາດ ມີໜ້າທີ່ກວດກາ ກວດການ ການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ) ແລະ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ)ຂອງໂຄງການລົງທຶນ;

– ອົງການປົກຄອງທ້ອງຖິ່ນ ໂດຍປະສານສົມທົບກັບ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ມີໜ້າທີ່ສ້າງຕັ້ງໜ່ວຍງານຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມຢູ່ຂັ້ນເມືອງທີ່ມີໂຄງການລົງທຶນ ເພື່ອເຮັດໜ້າທີ່ຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ) ເປັນປະຈຳ ແລ້ວລາຍງານໃຫ້ອົງການປົກຄ້ອງທ້ອງຖິ່ນ ແລະ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເປັນປົກກະຕິ ຫລື ລາຍງານດ່ວນໃນກໍລະນີສຸກເສີນ;

– ອົງການປົກຄອງທ້ອງຖິ່ນ ໂດຍປະສານສົມທົບກັບ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ມີໜ້າທີ່ສ້າງຕັ້ງໜ່ວຍງານຍົກຍ້າຍຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່ ເພື່ອເຮັດໜ້າທີ່ :

ກ) ເປັນກອງເລຂາໃຫ້ຄະນະກຳມະການຍົກຍ້າຍຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່;

ຂ) ຕິດຕາມກວດກາການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ) ໂດຍສົມທົບກັບຜູ້ພັດທະນາໂຄງການ ແລ້ວລາຍງານໃຫ້ອົງການປົກຄອງທ້ອງຖິ່ນ ແລະ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເປັນປະຈຳ ຫລື ລາຍງານດ່ວນໃນກໍລະນີສຸກເສີນ.

– ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ມີໜ້າທີ່ໃຫ້ຄຳແນະນຳດ້ານວິຊາການ, ສ້າງຄວາມເຂັ້ມແຂງ ແລະ ຝຶກອົບຮົມໃຫ້ໜ່ວຍງານຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ສັງຄົມ ໂດຍຜ່ານແຜນການ ແລະ ງົບປະມານໃນແຕ່ລະໄລຍະ ຊຶ່ງແຫລ່ງທຶນມາຈາກສັນຍາສຳປະທານ ຫລື ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ)ເປັນຕົ້ນຕໍ ແລະ ງົບປະມານຂອງລັດ;

**ມາດຕາ 25. ການຕິດຕາມກວດກາພາຍນອກ**

ການຕິດຕາມກວດກາພາຍນອກມີຈຸດປະສົງ ກວດກາການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການລົງທຶນ ຊຶ່ງປະກອບດ້ວຍ:

1). ການຕິດຕາມກວດກາ ຂອງສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຕິດຕາມກວດກາ ຂອງສະພາແຫ່ງຊາດ;

2). ການກວດກາຂອງອົງການກວດກາລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດກາລັດ;

3) ການກວດກາຂອງອົງການກວດສອບແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການກວດສອບ;

4). ການຕິດຕາມກວດກາຂອງຄະນະຊ່ຽວຊານ ໃນກໍລະນີທີ່ຈຳເປັນ.

## ພາກທີ IV
## ຄະນະກຳມະການຊີ້ນຳໂຄງການ ແລະການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ສັງຄົມ

**ມາດຕາ 26. ຄະນະກຳມະການຊີ້ນຳລະດັບຊາດ**

ສຳລັບໂຄງການລົງທຶນທີ່ມີຄວາມສະຫລັບສັບຊ້ອນ ແລະ ມີຜົນກະທົບຢ່າງໃຫຍ່ຫລວງຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ລັດຖະບານແຕ່ງຕັ້ງຄະນະກຳມະການຊີ້ນຳລະດັບຊາດ ຊຶ່ງມີສິດ ແລະ ຫນ້າດັ່ງນີ້:

1) ຊີ້ນຳ ນຳພາ, ຕິດຕາມຊຸກຍູ້ ແລະ ກວດກາໃນໄລຍະການກໍ່ສ້າງ ແລະ/ຫລື ໄລຍະການດຳເນີນກິດຈະການຂອງໂຄງການລົງທຶນທີ່ກ່ຽວຂ້ອງ ໃນນັ້ນໃຫ້ເອົາໃຈໃສ່ຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ເພື່ອລາຍງານໃຫ້ລັດຖະບານຊາບຢ່າງເປັນປົກກະຕິ;

2) ແຕ່ງຕັ້ງຄະນະຊ່ຽວຊານ ຫລື ບໍລິສັດທີ່ປຶກສາ ທີ່ມີເງື່ອນໄຂ ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການລົງທຶນ;

3) ຄະນະກຳມະການຊີ້ນຳລະດັບຊາດ ມີງົບປະມານທີ່ໄດ້ມາຈາກໂຄງການລົງທຶນ, ງົບປະມານແຫ່ງລັດ ຂອງກະຊວງທີ່ຮັບຜິດຊອບໂຄງການລົງທຶນ ແລະ ແຫລ່ງອື່ນໆ.

**ມາດຕາ 27. ໂຄງປະກອບບຸກຄະລະກອນຂອງຄະນະກຳມະການຊີ້ນຳລະດັບຊາດ**

ຄະນະກຳມະການຊີ້ນຳລະດັບຊາດ ປະກອບດ້ວຍ:

1) ຫົວໜ້າຂະແໜງການ ທີ່ຮັບຜິດຊອບໂຄງການລົງທຶນ ເປັນປະທານ;

2) ຮອງຫົວໜ້າຂະແໜງການ ທີ່ຮັບຜິດຊອບໂຄງການລົງທຶນ ເປັນຮອງປະທານ ທັງເປັນຜູ້ປະຈຳການ;

3) ຮອງຫົວຫນ້າອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ແລະ ຮອງເຈົ້າແຂວງຂອງແຂວງທີ່ກ່ຽວຂ້ອງ ຫລື ຮອງເຈົ້າຄອງນະຄອນ ເປັນຮອງປະທານ;

4) ຕາງຫນ້າຈາກຂະແຫນງການກ່ຽວຂ້ອງ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ເປັນກຳມະການ;

5) ຕາງຫນ້າຜູ້ພັດທະນາໂຄງການ ເປັນກຳມະການ.

ຄະນະກຳມະການຊີ້ນຳລະດັບຊາດ ມີກອງເລຂາຂອງຕົນເພື່ອເປັນເສນາທິການ; ກອງເລຂາປະກອບດ້ວຍບັນດາກົມ, ກອງທີ່ກ່ຽວຂ້ອງ ຂອງຂະແຫນງທີ່ຮັບຜິດຊອບໂຄງການລົງທຶນ, ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ແລະ ກອງເລຂາຂອງຄະນະກຳມະການຍົກຍ້າຍຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່ຂອງແຂວງ ຫລື ນະຄອນ.

**ມາດຕາ 28. ຄະນະກຳມະການຍົກຍ້າຍຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່**

ລັດຖະບານແຕ່ງຕັ້ງຄະນະກຳມະການຍົກຍ້າຍຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່ຂັ້ນແຂວງ ຫລື ນະຄອນ. ຄະນະກຳມະການດັ່ງກ່າວ ມີສິດ ແລະ ຫນ້າທີ່ ດັ່ງນີ້:

1) ຊີ້ນຳ ນຳພາ, ຄຸ້ມຄອງ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານຍົກຍ້າຍຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ທີ່ຕັ້ງຢູ່ໃນແຂວງ ຫລື ນະຄອນຂອງຕົນ ອີງຕາມແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ;

2) ພິຈາລະນາແກ້ໄຂຄຳຮ້ອງທຸກຂອງປະຊາຊົນ ໂດຍປະສານສົມທົບຢ່າງໃກ້ຊິດກັບຜູ້ພັດທະນາໂຄງການ ແລະ ຂະແໜງການທີ່ກ່ຽວຂ້ອງ ແລ້ວລາຍງານຜົນການຈັດຕັ້ງປະຕິບັດວຽກງານ ດັ່ງກ່າວໃຫ້ລັດຖະບານຊາບ ຢ່າງເປັນປົກກະຕິ.

ຄະນະກຳມະການດັ່ງກ່າວນີ້ ມີງົບປະມານທີ່ໄດ້ມາຈາກໂຄງການລົງທຶນ, ງົບປະມານແຫ່ງລັດ ແລະ ແຫລ່ງທຶນອື່ນໆ.

**ມາດຕາ 29. ໂຄງປະກອບບຸກຄະລາກອນຂອງຄະນະກຳມະການຍົກຍ້າຍຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່**

ຄະນະກຳມະການຍົກຍ້າຍຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່ ປະກອບດ້ວຍ:

1). ເຈົ້າແຂວງ ຫລື ເຈົ້າຄອງນະຄອນ ເປັນປະທານ;

2). ຮອງເຈົ້າແຂວງ ຫລື ຮອງເຈົ້າຄອງນະຄອນ ເປັນຮອງປະທານ ທັງເປັນຜູ້ປະຈຳການ;

3). ເຈົ້າເມືອງ ເມືອງທີ່ກ່ຽວຂ້ອງ, ຕົວແທນຈາກພະແນກການທີ່ກ່ຽວຂ້ອງ, ແນວລາວສ້າງຊາດຂັ້ນແຂວງ ຫລື ນະຄອນ, ອົງການຈັດຕັ້ງມະຫາຊົນ ແລະ ຕາງໜ້າຜູ້ພັດທະນາໂຄງການເປັນກຳມະການ.

ຄະນະກຳມະການຍົກຍ້າຍຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່ ຂັ້ນແຂວງ ຫລື ນະຄອນມີກອງເລຂາຂອງຕົນ ເພື່ອເຮັດໜ້າທີ່ເປັນເສນາທິການ ຊຶ່ງຖືກແຕ່ງຕັ້ງໂດຍປະທານຄະນະກຳມະການຍົກຍ້າຍຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່.

## ພາກທີ V
## ການປ່ຽນແປງເຈົ້າຂອງໂຄງການລົງທຶນ

**ມາດຕາ 30. ການປ່ຽນແປງເຈົ້າຂອງ ໂຄງການລົງທຶນ**

ຜູ້ພັດທະນາໂຄງການທີ່ຕ້ອງການໂອນໂຄງການລົງທຶນ (ຕໍ່ໄປນີ້ເອີ້ນວ່າຜູ້ພັດທະນາເກົ່າ) ໃຫ້ບຸກຄົນອື່ນ (ຕໍ່ໄປນີ້ເອີ້ນວ່າ ຜູ້ພັດທະນາໃໝ່) ຈະຕ້ອງສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງເພື່ອຂໍອະນຸຍາດ. ຂະແໜງການທີ່ກ່ຽວຂ້ອງດັ່ງກ່າວຈະອະນຸຍາດການໂອນໄດ້ກໍຕໍ່ເມື່ອມີຄວາມເຫັນດີເປັນເອກະພາບນຳກັນລະຫວ່າງຜູ້ພັດທະນາເກົ່າ ແລະ ຜູ້ພັດທະນາໃໝ່ ກ່ຽວກັບການສືບຕໍ່ຈັດຕັ້ງປະຕິບັດພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ.

ສຳລັບໂຄງການລົງທຶນທີ່ຍັງບໍ່ທັນໄດ້ຮັບໃບຢັ້ງຢືນດ້ານສິ່ງແວດລ້ອມ, ຜູ້ພັດທະນາໃໝ່ຕ້ອງສືບຕໍ່ດຳເນີນການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສ້າງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ຕາມເນື້ອໃນຂອງດຳລັດສະບັບນີ້.

ສຳລັບໂຄງການລົງທຶນ ທີ່ໄດ້ຮັບໃບຢັ້ງຢືນດ້ານສິ່ງແວດລ້ອມແລ້ວ ຜູ້ພັດທະນາໃໝ່ຕ້ອງປະຕິບັດພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງຕົນ ຕາມທີ່ໄດ້ຮັບຮອງເອົາແລ້ວ ແລະຕ້ອງມີງົບປະມານເພື່ອຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ

(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ບົນພື້ນຖານການຕົກລົງເປັນລາຍລັກອັກສອນລະຫວ່າງຜູ້ພັດທະນາເກົ່າ ແລະ ຜູ້ພັດທະນາໃຫມ່.

## ພາກທີ VI
## ການເຜີຍແຜ່ຂໍ້ມູນຂ່າວສານ

### ມາດຕາ 31. ການເຜີຍແຜ່ຂໍ້ມູນຂ່າວສານທົ່ວໄປ

ການເຜີຍແຜ່ຂໍ້ມູນຂ່າວສານທົ່ວໄປ ໃຫ້ປະຕິບັດ ດັ່ງນີ້ :

1) ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ມີຫນ້າທີ່ຄຸ້ມຄອງຂໍ້ມູນຂ່າວສານ ກ່ຽວກັບວຽກງານສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການລົງທຶນ ໂດຍສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ຜູ້ພັດທະນາໂຄງການ ພ້ອມທັງອຳນວຍຄວາມສະດວກໃຫ້ຜູ້ມີສ່ວນຮ່ວມ ລວມທັງປະຊາຊົນຜູ້ໄດ້ຮັບຜົນກະທົບໂດຍກົງ ຈາກໂຄງການລົງທຶນ ໄດ້ເຂົ້າເຖິງຂໍ້ມູນຂ່າວສານດັ່ງກ່າວ;

2) ຜູ້ພັດທະນາໂຄງການ ມີຫນ້າທີ່ຄຸ້ມຄອງຂໍ້ມູນຂ່າວສານ ກ່ຽວກັບຜົນຂອງການຈັດຕັ້ງປະຕິບັດມາດຕະການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫລື ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ແລະ ອຳນວຍຄວາມສະດວກໃຫ້ຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ ເຂົ້າເຖິງຂໍ້ມູນຂ່າວສານດັ່ງກ່າວ. ສຳລັບໂຄງການລົງທຶນໃນກຸ່ມທີ່ 2, ຜູ້ພັດທະນາໂຄງການ ຕ້ອງສ້າງສູນຂໍ້ມູນຂ່າວສານຢູ່ໃນຂອບເຂດຂອງໂຄງການລົງທຶນ ແລະ ບັນດາເມືອງທີ່ກ່ຽວຂ້ອງ;

3) ຂໍ້ມູນຂ່າວສານທີ່ຈະເຜີຍແຜ່ຕ້ອງເປັນທັງພາສາລາວ ແລະ ພາສາອັງກິດ ຊຶ່ງປະກອບມີດັ່ງນີ້:

ກ) ບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ຍົກເວັ້ນຂໍ້ມູນຂ່າວສານບໍ່ເປີດເຜີຍຕາມມາດຕາ 32 ຂອງດຳລັດສະບັບນີ້;

ຂ) ບົດລາຍງານການຈັດຕັ້ງປະຕິບັດ ມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ)ຂອງຜູ້ພັດທະນາໂຄງການ;

ຄ) ບົດລາຍງານ ຂອງອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຫລື ອົງການປົກຄອງທ້ອງຖິ່ນທີ່ອອກໃບຢັ້ງຢືນດ້ານສິ່ງແວດລ້ອມ ກ່ຽວກັບການຕິດຕາມກວດກາການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ);

ງ) ລາຍລະອຽດກ່ຽວກັບການປັບໃໝ ຫລື ມາດຕະການອື່ນໆ ທີ່ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຫລື ຂະແໜງຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມຂັ້ນແຂວງ ຫລື ນະຄອນ ແລະ ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ ໄດ້ປະຕິບັດຕໍ່ຜູ້ພັດທະນາໂຄງການ;

ຈ) ລາຍຈ່າຍ ສຳລັບວຽກງານສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການລົງທຶນ.

**ມາດຕາ 32. ຂໍ້ມູນຂ່າວສານບໍ່ເປີດເຜີຍ**

ສຳລັບຂໍ້ມູນຂ່າວສານບໍ່ເປີດເຜີຍ ໃຫ້ປະຕິບັດ ດັ່ງນີ້:

1) ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ສະຫງວນສິດໃນການເປີດເຜີຍຂໍ້ມູນຂ່າວສານທີ່ພົວພັນກັບຄວາມໝັ້ນຄົງຂອງຊາດ ໃນບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ);

2) ອີງຕາມການສະເໜີເປັນລາຍລັກອັກສອນ ຂອງຜູ້ພັດທະນາໂຄງການ, ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ພິຈາລະນາສະຫງວນສິດ ໃນການເປີດເຜີຍຂໍ້ມູນຂ່າວສານບໍ່ເປີດເຜີຍໃນບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ດັ່ງນີ້:

ກ) ຂໍ້ມູນຂ່າວສານກ່ຽວກັບສິດສ່ວນບຸກຄົນ;

ຂ) ຂໍ້ມູນຂ່າວສານກ່ຽວກັບສິດດ້ານຊັບສິນ;

ຄ) ຂໍ້ມູນຂ່າວສານກ່ຽວກັບສິດດ້ານການຄ້າ.

3) ໃນກໍລະນີທີ່ຜູ້ພັດທະນາໂຄງການບໍ່ຕ້ອງການເປີດເຜີຍຂໍ້ມູນຂ່າວສານໃດໜຶ່ງຕາມຂໍ້ 2 ເທິງນີ້, ຜູ້ພັດທະນາໂຄງການຕ້ອງເຮັດຄຳຮ້ອງ ພ້ອມທັງຄັດຕິດຂໍ້ມູນຂ່າວສານດັ່ງກ່າວ ສະເໜີເຖິງອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ. ພາຍໃນ 25 ວັນລັດຖະການ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຈະຕົກລົງວ່າຂໍ້ມູນຂ່າວສານທັງໝົດ ຫລື ສ່ວນໃດໜຶ່ງທີ່ສະເໜີມານັ້ນ ສາມາດຖືເປັນຂໍ້ມູນຂ່າວສານບໍ່ເປີດເຜີຍ;

4) ໃນກໍລະນີທີ່ຂໍ້ມູນຂ່າວສານ ຊຶ່ງສະເໜີມານັ້ນ ຫາກຖືກພິຈາລະນາໃຫ້ເປັນຂໍ້ມູນຂ່າວສານບໍ່ເປີດເຜີຍ ຂໍ້ມູນຂ່າວສານດັ່ງກ່າວ ຈະຖືກເກັບຮັກສາໄວ້ເປັນຄວາມລັບເປັນເວລາ 4 ປີ. ຜູ້ພັດທະນາໂຄງການ ສາມາດຂໍຕໍ່ອາຍຸໄດ້ພາຍໃນ 60 ວັນລັດຖະການ ກ່ອນໝົດອາຍຸ, ຖ້າບໍ່ດັ່ງນັ້ນຂໍ້ມູນຂ່າວສານດັ່ງກ່າວຈະບໍ່ຖືເປັນຂໍ້ມູນຂ່າວສານບໍ່ເປີດເຜີຍຕໍ່ໄປອີກ.

## ພາກທີ VII
## ການແກ້ໄຂຂໍ້ຂັດແຍ່ງດ້ານສິ່ງແວດລ້ອມ ແລະ ສັງຄົມ

**ມາດຕາ 33. ປະເພດຂໍ້ຂັດແຍ່ງ**

ຂໍ້ຂັດແຍ່ງຕົ້ນຕໍທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ປະກອບມີ ດັ່ງນີ້:

1) ສິດ ແລະ ຄວາມຮັບຜິດຊອບໃນການຄຸ້ມຄອງ, ຂຸດຄົ້ນ ແລະ ນຳໃຊ້ຊັບພະຍາກອນທຳມະຊາດເປັນຕົ້ນແມ່ນ: ນ້ຳ, ດິນ, ບໍ່ແຮ່, ປ່າໄມ້, ເຄື່ອງປ່າຂອງດົງ ແລະ ຊີວະນາໆພັນ ໃນເຂດໂຄງການລົງທຶນ;

2) ການກຳນົດຕົ້ນເຫດຂອງການເກີດມົນລະພິດ, ການເສື່ອມໂຊມດ້ານສິ່ງແວດລ້ອມທີ່ສົ່ງຜົນກະທົບຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນ ລວມທັງຂໍ້ຂັດແຍ່ງ ກ່ຽວກັບຄວາມຮັບຜິດຊອບໃນການແກ້ໄຂ, ບູລະນະ, ຟື້ນຟູ ແລະ ທົດແທນຄ່າເສຍຫາຍຈາກເຫດການດັ່ງກ່າວ;

3) ການກຳນົດງົບປະມານ ຫລື ອັດຕາການທົດແທນຄ່າເສຍຫາຍຕ່າງໆ ເຊັ່ນ: ທີ່ດິນ, ເຮືອນ, ການບໍລິການ ແລະ ອື່ນໆ ລວມທັງຂໍ້ຂັດແຍ່ງກ່ຽວກັບການເບີກຈ່າຍ ຫລື ຂໍ້ຕົກລົງຕ່າງໆກ່ຽວກັບການທົດແທນຄ່າເສຍຫາຍ.

**ມາດຕາ 34. ຄູ່ກໍລະນີ**

ຂໍ້ຂັດແຍ່ງດ້ານສິ່ງແວດລ້ອມ ແລະ ສັງຄົມ ອາດເກີດມີຂຶ້ນ ລະຫວ່າງ:

1. ຜູ້ພັດທະນາໂຄງການດ້ວຍກັນ;
2. ຜູ້ພັດທະນາໂຄງການ ກັບຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ;
3. ຜູ້ພັດທະນາໂຄງການ ກັບອົງການຈັດຕັ້ງຂອງລັດ ຫລື ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງອື່ນໆ.

**ມາດຕາ 35. ວິທີການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງ ໃຫ້ປະຕິບັດດ້ວຍວິທີການ ດັ່ງນີ້:

1) ໃນກໍລະນີຂໍ້ຂັດແຍ່ງລະຫວ່າງຜູ້ພັດທະນາໂຄງການດ້ວຍກັນ, ໃຫ້ດຳເນີນການແກ້ໄຂດ້ວຍການເຈລະຈາຕໍ່ລອງ, ປະນີປະນອມ ໃນເບື້ອງຕົ້ນ, ຖ້າຍັງບໍ່ສາມາດຕົກລົງກັນໄດ້ ກໍໃຫ້ສະເຫນີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເປັນຜູ້ແກ້ໄຂ; ແລະ ຖ້າຫາກຍັງບໍ່ສາມາດແກ້ໄຂກັນໄດ້ ຄູ່ກໍລະນີ ມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ຂອງ ສປປ ລາວ ພິຈາລະນາຕັດສິນ ຫລື ພິພາກສາຕາມຂະບວນການຍຸຕິທຳ, ຖ້າຫາກສັນຍາຮ່ວມທຸລະກິດນັ້ນບໍ່ໄດ້ກຳນົດໄວ້ຢ່າງອື່ນ;

2) ໃນກໍລະນີມີຂໍ້ຂັດແຍ່ງລະຫວ່າງຜູ້ພັດທະນາໂຄງການ ກັບຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການລົງທຶນ:

ກ) ຜູ້ພັດທະນາໂຄງການ ຕ້ອງພິຈາລະນາຄຳສະເຫນີ ແລະ ແກ້ໄຂຂໍ້ຂັດແຍ່ງຕ່າງໆດ້ານສິ່ງແວດລ້ອມ ບົນພື້ນຖານການປຶກສາຫາລືແບບໂປ່ງໃສ ແລະ ແກ້ໄຂບັນຫາດ້ວຍການປະນີປະນອມ; ຖ້າບໍ່ສາມາດແກ້ໄຂໄດ້ ຄູ່ກໍລະນີສາມາດສະເຫນີຕໍ່ອົງການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນ ຕາມແຕ່ລະຂັ້ນ ເພື່ອດຳເນີນການແກ້ໄຂ. ຖ້າອົງການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນບໍ່ສາມາດແກ້ໄຂກັນໄດ້ ຄູ່ກໍລະນີມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ພິຈາລະນາຕັດສິນ ຫລື ພິພາກສາຕາມ ກົດຫມາຍ;

ຂ) ຜູ້ພັດທະນາໂຄງການ ຕ້ອງຮັບຟັງຄໍາຮ້ອງທຸກ ແລະ ແກ້ໄຂຂໍ້ຂັດແຍ່ງຕ່າງໆດ້ານສັງຄົມ ໂດຍປະຕິບັດຕາມ ດໍາລັດນາຍົກລັດຖະມົນຕີສະບັບເລກທີ 192/ນຍ, ລົງວັນທີ 7 ກໍລະກົດ 2005 ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ຈາກໂຄງການລົງທຶນ ແລະ ຂໍ້ກໍານົດ ສະບັບເລກທີ 2432/ອວຕສ-ສນຍ, ລົງວັນທີ 11 ພະຈິກ 2005 ວ່າດ້ວຍການຈັດຕັ້ງປະຕິບັດ ດໍາລັດວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ຈາກໂຄງການລົງທຶນ ຫລື ລະບຽບການອື່ນທີ່ປ່ຽນແທນ;

3.) ໃນກໍລະນີຂໍ້ຂັດແຍ່ງລະຫວ່າງຜູ້ພັດທະນາໂຄງການກັບອົງການຈັດຕັ້ງຂອງລັດ, ອົງການປົກຄອງທ້ອງຖິ່ນ ຫລື ອົງການຈັດຕັ້ງສາກົນໃຫ້ປະຕິບັດຕາມກົດໝາຍ ຂອງ ສປປ ລາວ ຫລື ສົນທິສັນຍາ ຫລື ສັນຍາທີ່ ສປປ ລາວ ເປັນພາຄີ ຫລື ໄດ້ລົງນາມຮ່ວມກັນ (ຖ້າມີ).

# ພາກທີ VIII
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

## ມາດຕາ 36. ນະໂຍບາຍ ຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ຂອງໂຄງການລົງທຶນ ແລະ ປະຕິບັດຖືກຕ້ອງຕາມລະບຽບກົດໝາຍ ຂອງ ສປປ ລາວ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

## ມາດຕາ 37. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງ ທີ່ລະເມີດດໍາລັດສະບັບນີ້ ຈະຖືກປະຕິບັດມາດຕະການຕ່າງໆ ດ້ວຍການຕັກເຕືອນ ແລະ ສຶກສາອົບຮົມ, ປັບໃໝ, ໃຊ້ແທນຄ່າເສຍຫາຍ ທາງແພ່ງ ແລະ ຮັບຜິດຊອບທາງອາຍາ ແລ້ວແຕ່ກໍລະນີໜັກ ຫລື ເບົາ ຕາມກົດໝາຍ.

## ມາດຕາ 38. ມາດຕະການຕັກເຕືອນ ແລະ ສຶກສາອົບຮົມ

ໃນກໍລະນີທີ່ຜົນການຕິດຕາມກວດກາສະແດງໃຫ້ເຫັນວ່າ ມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫລື ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ບໍ່ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງຄົບຖ້ວນ, ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ຈະຕັກເຕືອນເປັນລາຍລັກອັກສອນ ແລະ ແນະນໍາໃຫ້ຜູ້ພັດທະນາໂຄງການຈັດຕັ້ງປະຕິບັດມາດຕະການ ຫລື ແຜນດັ່ງກ່າວຢ່າງເຂັ້ມງວດ ເພື່ອເຮັດໃຫ້ບັນຫາທີ່ຄ້າງຄາຕ່າງໆໄດ້ຮັບການແກ້ໄຂຢ່າງທັນການ ພາຍໃນກໍານົດເວລາທີ່ແນ່ນອນ. ໜັງສືແຈ້ງເຕືອນ ຈະຕ້ອງກໍານົດ ດັ່ງນີ້:

ກ) ບັນຫາຕ່າງໆທີ່ກໍ່ ຫລື ອາດຈະກໍ່ໃຫ້ເກີດມີການລະເມີດ;

ຂ) ຂັ້ນຕອນຕ່າງໆ ແລະ ໄລຍະເວລາທີ່ຈະຕ້ອງປະຕິບັດເພື່ອແກ້ໄຂບັນຫາ.

ມາດຕາ 39. ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງ ທີ່ມີການກະທຳໃດໜຶ່ງລຸ່ມນີ້ ຈະຖືກປັບໃໝ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ດັ່ງນີ້:

ກ) ການໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ຫລື ບິດເບືອນຂໍ້ມູນ ໃນບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ (ຜຄສຄ) ລວມທັງບົດລາຍງານການຕິດຕາມກວດກາ.

ຂ) ໃນກໍລະນີທີ່ພະນັກງານຕິດຕາມກວດກາໄດ້ແຈ້ງໃຫ້ຊາບລ່ວງໜ້າແລ້ວ, ແຕ່ບໍ່ໃຫ້ຄວາມຮ່ວມມື ຫລື ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານຕິດຕາມກວດກາ ໃນກໍລະນີດັ່ງນີ້ :

– ບໍ່ໃຫ້ຄວາມຮ່ວມມື ຫລື ຂັດຂວາງ ການເຂົ້າໄປຍັງສະຖານທີ່ໂຄງການລົງທຶນ;

– ບໍ່ໃຫ້ຄວາມຮ່ວມມື ຫລື ຂັດຂວາງການເກັບຕົວຢ່າງ ຫລື ເກັບກຳຫລັກຖານ ເພື່ອຕິດຕາມກວດກາດ້ານສິ່ງແວດລ້ອມ;

– ບໍ່ໃຫ້ຄວາມຮ່ວມມື ຫລື ຂັດຂວາງການຖ່າຍຮູບ ຫລື ຂັດຂວາງການສຳພາດບຸກຄົນໃດໜຶ່ງ ກ່ຽວກັບໂຄງການລົງທຶນ.

ຄ) ບໍ່ແຈ້ງ ຫລື ລາຍງານກ່ຽວກັບເຫດການສຸກເສີນດ້ານສິ່ງແວດລ້ອມ ແລະ ສັງຄົມ ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງຢ່າງທັນການ ຫລື ເມີນເສີຍ;

ງ) ບຸກເບີກ, ຂຸດຄົ້ນ ຫລື ກໍ່ສ້າງໂຄງການລົງທຶນ ໂດຍບໍ່ມີໃບຢັ້ງຢືນດ້ານສິ່ງແວດລ້ອມ;

ຈ) ດຳເນີນກິດຈະການ ໂດຍບໍ່ປັບປຸງມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຫລື ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ (ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້;

ສ) ກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໃນຂອບເຂດໂຄງການ ຫລື ມີການຂະຫຍາຍໂຄງການລົງທຶນ ໂດຍບໍ່ດຳເນີນການສຶກສາສິ່ງແວດລ້ອມເບື້ອງຕົ້ນ ແລະ ກຳນົດມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບ ຫລື ດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສ້າງແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ເພີ່ມເຕີມ;

ຊ) ບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນໃບຢັ້ງຢືນດ້ານສິ່ງແວດລ້ອມ, ພັນທະທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ໄດ້ກຳນົດໄວ້ໃນສັນຍາສຳປະທານ;

ຍ) ບໍ່ຈັດຕັ້ງປະຕິບັດມາດຕະການປ້ອງກັນ ແລະ ຫລຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມແລະສັງຄົມ ຫລື ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) ຢ່າງຄົບຖ້ວນ;

ດ) ບໍ່ປະຕິບັດຕາມເງື່ອນໄຂ ແລະ ຄຳແນະນຳ ໃນໃບຕັກເຕືອນ;

໓) ບໍ່ປະຕິບັດຕາມມາດຕະຖານຄຸນນະພາບສິ່ງແວດລ້ອມ ແລະ ມາດຕະຖານການປ່ອຍມົນລະພິດທີ່ກໍານົດໄວ້.

ສໍາລັບອັດຕາປັບໃໝລະອຽດນັ້ນ ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ເປັນຜູ້ອອກລະບຽບການສະເພາະຕ່າງຫາກ.

**ມາດຕາ 40. ມາດຕະການອື່ນໆ**

ນອກຈາກມາດຕະການຕ່າງໆ ທີ່ກໍານົດໄວ້ໃນມາດຕາ 37, 38, 39 ເທິງນີ້ ບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງ ທີ່ດໍາເນີນໂຄງການລົງທຶນຕ່າງໆທີ່ໄດ້ລະເມີດດໍາລັດສະບັບນີ້ ອາດຖືກປະຕິບັດມາດຕະການອື່ນໆອີກ ດັ່ງນີ້:

ກ) ຍຶດພາຫະນະ, ອຸປະກອນ ທີ່ນໍາໃຊ້ ຫລື ມີສ່ວນພົວພັນກັບການກະທໍາຜິດ;

ຂ) ໂຈະຊົ່ວຄາວ ຫລື ຖາວອນ ບາງວຽກຂອງໂຄງການລົງທຶນ ຫລື ທັງໝົດໂຄງການລົງທຶນ ອີງຕາມຄໍາສັ່ງຂອງ ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ດ້ວຍການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ;

ໃນການກໍານົດມາດຕະການລົງໂທດອື່ນ ລວມທັງການກໍານົດໄລຍະເວລາຂອງການໂຈະຊົ່ວຄາວບາງວຽກຂອງໂຄງການລົງທຶນ ຫລື ທັງໝົດໂຄງການລົງທຶນຕ້ອງໄດ້ອີງໃສ່ບັນດາປັດໄຈ ດັ່ງນີ້:

ກ) ລະດັບ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຂອງການລະເມີດ;

ຂ) ຄວາມຮ້າຍແຮງຂອງມົນລະພິດທີ່ເກີດຂຶ້ນ ຈາກການລະເມີດ;

ຄ) ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ທີ່ເກີດຂຶ້ນ ເປັນສິ່ງທີ່ສາມາດຄາດຄະເນໄດ້ລ່ວງໜ້າ ແຕ່ບໍ່ໄດ້ວາງມາດຕະການປ້ອງກັນ ຫລື ເປັນສິ່ງທີ່ບໍ່ສາມາດຄາດຄະເນລ່ວງໜ້າໄດ້;

ງ) ປະຫວັດຂອງຜູ້ພັດທະນາໂຄງການ ກ່ຽວກັບການລະເມີດລະບຽບກົດໝາຍໃນໄລຍະຜ່ານມາ;

ຈ) ປະຫວັດຂອງໂຄງການລົງທຶນກ່ຽວກັບການລະເມີດລະບຽບກົດໝາຍໃນໄລຍະຜ່ານມາ.

ຖ້າການລະເມີດ ຫາກສ້າງຄວາມເສຍຫາຍຕໍ່ສິ່ງແວດລ້ອມ, ຜູ້ພັດທະນາໂຄງການ ອາດຖືກສັ່ງໃຫ້ຮັບຜິດຊອບທຸກຄ່າໃຊ້ຈ່າຍ ໃນການແກ້ໄຂບັນຫາສິ່ງແວດລ້ອມ ຫລື ຟື້ນຟູສະພາບສິ່ງແວດລ້ອມດັ່ງກ່າວ ໃຫ້ດີຂຶ້ນ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 41. ການຈັດຕັ້ງປະຕິບັດ**

ມອບໃຫ້ອົງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ເປັນໃຈກາງປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຜັນຂະຫຍາຍ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດດໍາລັດສະບັບນີ້ ໃຫ້ມີປະສິດທິຜົນ.

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ ທີ່ກ່ຽວຂ້ອງທັງພາກລັດ ແລະ ພາກເອກະຊົນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດໍາລັດສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 42. ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫລັງ 30 ວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ;

ຂໍ້ກຳນົດ, ບົດບັນຍັດ ແລະ ລະບຽບການ ໃດທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ,**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ບົວສອນ ບຸບຜາວັນ

พาກທີ I ບົດບັນຍັດທົ່ວໄປ .......... 1
ມາດຕາ 1. ຈຸດປະສົງ .......... 1
ມາດຕາ 2. ຂອບເຂດການນຳໃຊ້ .......... 2
ມາດຕາ 3. ຄວາມໝາຍຂອງຄຳສັບ .......... 2
ມາດຕາ 4. ຫລັກການທົ່ວໄປ .......... 5
ພາກທີ II ຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ .......... 6
ໝວດທີ 1 ຂັ້ນຕອນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການກັ່ນຕອງໂຄງການລົງທຶນ .......... 6
ມາດຕາ 5. ຂັ້ນຕອນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ .......... 6
ມາດຕາ 6. ການກັ່ນຕອງໂຄງການລົງທຶນ .......... 6
ໝວດທີ 2 ການມີສ່ວນຮ່ວມ .......... 7
ມາດຕາ 7. ສິດ ແລະ ໜ້າທີ່ ຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການລົງທຶນ ແລະ ຜູ້ມີສ່ວນຮ່ວມອື່ນໆ .......... 7
ມາດຕາ 8. ຂັ້ນຕອນການມີສ່ວນຮ່ວມ .......... 8
ໝວດທີ 3 ການສຶກສາສິ່ງແວດລ້ອມເບື້ອງຕົ້ນ(ສສຕ) .......... 9
ມາດຕາ 9. ໜ້າທີ່ ຂອງອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ອົງການປົກຄອງທ້ອງຖິ່ນ, ຂະແໜງການທີ່ຮັບຜິດຊອບໂຄງການລົງທຶນ, ຂະແໜງການທີ່ກ່ຽວຂ້ອງ ແລະ ຜູ້ພັດທະ ນາໂຄງການ ໃນການສຶກສາສິ່ງແວດລ້ອມເບື້ອງຕົ້ນ .......... 9
ມາດຕາ 10. ການທົບທວນບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ .......... 11
ໝວດທີ 4 ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ(ປຜສ) .......... 13
ມາດຕາ 11. ການກຳນົດຂອບເຂດການສຶກສາ (Scoping) ແລະ ຂອບເຂດໜ້າວຽກ (TOR) .......... 13
ມາດຕາ 12. ໜ້າທີ່ ຂອງອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ບັນດາຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະ ຜູ້ພັດທະນາໂຄງການ ໃນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ .......... 13
ມາດຕາ 13. ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ) .......... 15
ມາດຕາ 14. ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສັງຄົມ(ຜຄສຄ) .......... 17
ມາດຕາ 15. ການທົບທວນບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ(ຜຄສລ), ແຜນການຄຸ້ມຄອງ ແລະ ຕິດຕາມກວດກາ ສັງຄົມ(ຜຄສຄ) .......... 19
ມາດຕາ 16. ການທົບທວນບົດລາຍງານໂຄງການລົງທຶນທີ່ມີຄວາມສະຫລັບສັບຊ້ອນ .......... 21
ໝວດທີ 5 ໃບຢັ້ງຢືນດ້ານສິ່ງແວດລ້ອມ .......... 22
ມາດຕາ 17. ການອອກໃບຢັ້ງຢືນດ້ານສິ່ງແວດລ້ອມ .......... 22
ມາດຕາ 18. ອາຍຸຂອງໃບຢັ້ງຢືນດ້ານສິ່ງແວດລ້ອມ .......... 22
ມາດຕາ 19. ການອອກໃບຢັ້ງຢືນດ້ານສິ່ງແວດລ້ອມ ໃຫ້ໂຄງການລົງທຶນທີ່ກຳລັງເຄື່ອນໄຫວກິດຈະການ .......... 23
ໝວດທີ 6 ພັນທະໃນການໃຊ້ຈ່າຍ ສຳລັບວຽກງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະການຄຸ້ມຄອງຄ່າທຳນຽມ ແລະ ຄ່າບໍລິການ .......... 24
ມາດຕາ 20 ພັນທະໃນການໃຊ້ຈ່າຍສຳລັບວຽກງານ ການສຶກສາສິ່ງແວດລ້ອມເບື້ອງຕົ້ນ ຫລື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ .......... 24
ມາດຕາ 21. ຄ່າທຳນຽມ ແລະ ຄ່າບໍລິການ .......... 25
ພາກທີ III ການຄຸ້ມຄອງ ແລະ ຕິດຕາມກວດກາ .......... 25
ມາດຕາ 22. ການຈັດຕັ້ງຄຸ້ມຄອງ ແລະ ຕິດຕາມກວດກາ .......... 25
ມາດຕາ 23. ການຕິດຕາມກວດກາ ໂດຍຜູ້ພັດທະນາໂຄງການ .......... 26
ມາດຕາ 24. ການຕິດຕາມກວດກາ ໂດຍອົງການຈັດຕັ້ງລັດຖະບານ .......... 26
ມາດຕາ 25. ການຕິດຕາມກວດກາພາຍນອກ .......... 27

ພາກທີ IV ຄະນະກຳມະການຊີ້ນຳໂຄງການ ແລະການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ສັງຄົມ ..... 27
ມາດຕາ 26. ຄະນະກຳມະການຊີ້ນຳລະດັບຊາດ ..... 28
ມາດຕາ 27. ໂຄງປະກອບບຸກຄະລະກອນຂອງຄະນະກຳມະການຊີ້ນຳລະດັບຊາດ ..... 28
ມາດຕາ 28. ຄະນະກຳມະການຍົກຍ້າຍຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່ ..... 28
ມາດຕາ 29. ໂຄງປະກອບບຸກຄະລາກອນຂອງຄະນະກຳມະການຍົກຍ້າຍຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່ ..... 29
ພາກທີ V ການປ່ຽນແປງເຈົ້າຂອງໂຄງການລົງທຶນ ..... 29
ມາດຕາ 30. ການປ່ຽນແປງເຈົ້າຂອງ ໂຄງການລົງທຶນ ..... 29
ພາກທີ VI ການເຜີຍແຜ່ຂໍ້ມູນຂ່າວສານ ..... 30
ມາດຕາ 31. ການເຜີຍແຜ່ຂໍ້ມູນຂ່າວສານທົ່ວໄປ ..... 30
ມາດຕາ 32. ຂໍ້ມູນຂ່າວສານບໍ່ເປີດເຜີຍ ..... 31
ພາກທີ VII ການແກ້ໄຂຂໍ້ຂັດແຍ່ງດ້ານສິ່ງແວດລ້ອມ ແລະ ສັງຄົມ ..... 31
ມາດຕາ 33. ປະເພດຂໍ້ຂັດແຍ່ງ ..... 32
ມາດຕາ 34. ຄູ່ກໍລະນີ ..... 32
ມາດຕາ 35. ວິທີການແກ້ໄຂຂໍ້ຂັດແຍ່ງ ..... 32
ພາກທີ VIII ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ..... 33
ມາດຕາ 36. ນະໂຍບາຍ ຕໍ່ຜູ້ມີຜົນງານ ..... 33
ມາດຕາ 37. ມາດຕະການຕໍ່ຜູ້ລະເມີດ ..... 33
ມາດຕາ 38. ມາດຕະການຕັກເຕືອນ ແລະ ສຶກສາອົບຮົມ ..... 33
ມາດຕາ 39. ມາດຕະການປັບໃໝ ..... 34
ມາດຕາ 40. ມາດຕະການອື່ນໆ ..... 35
ພາກທີ IX ບົດບັນຍັດສຸດທ້າຍ ..... 35
ມາດຕາ 41. ການຈັດຕັ້ງປະຕິບັດ ..... 35
ມາດຕາ 42. ຜົນສັກສິດ ..... 36